<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lesson 4-7
Phaisane Somsith, Homeprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11-13 and Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13 and Christmas Lesson
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 1
## ຈົ່ງໃຫ້ຂ້າພະເຈົ້າແນະນຳພຣະເຢຊູເຖີດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 1: 1-20
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 1:1-20
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຜູ້ທີ່ເຮົາເອີ້ນວ່າ: ພຣະຄຣິດ, ພຣະບຸດຂອງພຣະເຈົ້າໄດ້ສະເດັດມາເພື່ອປະກາດຂ່າວປະເສີດແລະຮຽກເອີ້ນເອົາຄົນທັງຫລາຍໃຫ້ຕິດຕາມພຣະອົງ.
**ຄຳຖາມເພື່ອສຳຣວດ:** ຖ້າພວກເຮົາຫາກບໍ່ຮູ້ຈັກກັບພຣະອົງມາກ່ອນ, ບົດຮຽນນີ້ຈະບອກຫຍັງໃຫ້ກັບທ່ານ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະບອກໃຫ້ເຂົ້າໃຈວ່າ ພຣະຄັມພີຕອນນີ້ກ່າວເຖິງພຣະເຢຊູແລະການຮັບຜິດຊອບທີ່ພຣະອົງຄວນກະທຳ.

**ຄົ້ນຄວ້າພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກງຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຕົ້າໂຮມຄອບຄົວທີ່ເຊື່ອ ເພື່ອຈະກາຍມາເປັນຜູ້ຮັບໃຊ້
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ

### ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃຫ້ເລີ້ມຕົ້ນດ້ວຍການເວົ້າເຣື່ອງໄປເບິ່ງໜັງ, ໃຫ້ໃຊ້ຕົວຢ່າງໃນເຈັ້ຽບົດຮຽນ. ໃຫ້ນັກຮຽນເວົ້າເຣື່ອງໄປເບິ່ງໜັງຕົວຈິງທີ່ເຂົາເຈົ້າໄດ້ໄປເບິ່ງມາແລ້ວ. ເຂົາເຈົ້າມີຄວາມຮູ້ສຶກຢ່າງໃດ.

2. ບອກນັກຮຽນວ່າ ວັນນີ້ພວກເຮົາຈະຮຽນກ່ຽວກັບການກະທຳຕາມເຣື່ອງໃນພຣະຄັມພີ. ມີຜູ້ທຳນວາຍ, ການເດີນທາງໃນປ່າກັນດານ, ສຽງຈາກສວັນ, ການບໍ່ວາງໃຈ, ແລະການມອບຕົວຂອງສາວົກ. ເຣື່ອງນີ້ແມ່ນເລີ້ມຕົ້ນດ້ວຍການປ່າວປະກາດຂອງອົງພຣະເຢຊູຄຣິດ. ແນະນຳຂ່າວປະເສີດມາຣະໂກ ໂດຍໃຊ້ຂໍ້ຊີ້ແຈງໃນເຈັ້ຍພຣະຄັມພີ.

### ນຳພາສຶກສາພຣະຄັມພີ

3. ໃນຫົວຂໍ້ຂອງພຣະຄັມພີຊີ້ງບອກວ່າ "ແນະນຳພຣະເຢຊູ (1:1-8)" ເພື່ອຈະຂຍາຍຂ່າວປະເສີດມາຣະໂກ ໃຫ້ຄົນນື່ງອ່ານພຣະຄຳ 1:1-8. ຖາມ: ທ່ານຄິດຢ່າງໃດໃນຄວາມແຕກຕ່າງໃນການແນະນຳຂອງມາຣະໂກ ແລະມັດທາຍກັບລູກາ. (ບໍ່ມີປວັດການເກີດຂອງພຣະເຢຊູ ແມ້ແຕ່ອັນດຽວເລີຍ)
ຖາມ: ຄຳເວົ້າຄຳໃດທີ່ເປັນກຸນແຈເປີດເຣື່ອງໃນຂ່າວປະເສີດນີ້? ທ່ານມີຄວາມຮູ້ສຶກຢ່າງໃດທີ່ພຣະເຢຊູແນະນຳຕົວວ່າເປັນ "ບຸດຂອງພຣະເຈົ້າ" ?
ໃຫ້ນັກຮຽນພິຈາຣະນາເບິ່ງໜ້າທີ່ຂອງໂຢຮັນບັບຕິສໂຕ ລາວມີໜ້າທີ່ເຮັດຫຍັງ?

4. ໃຫ້ຄົນນື່ງອ່ານ (ມາຣະໂກ 1:9-11 ການບົ່ງບອກ) ໃນເຈັ້ຽບົດຮຽນ. ຄຣູຈະຊ່ວຍອະທິບາຍໃຫ້ເຂົ້າໃຈດີຂື້ນ. ໃຫ້ນັກຮຽນມີຄວາມຄິດຄວາມເຫັນດ້ວຍຜູ້ລະປະມານ 2 ນາທີ. ອະທິບາຍເຖິງການຮັບບັບຕິສມາຂອງພຣະເຢຊູ ແລະຄຳພະຍານທີ່ແນ່ນອນວ່າພຣະອົງເປັນພຣະບຸດຢ່າງແທ້ຈິງ.

5. ໃນເຈັ້ຽບົດຮຽນ (ການທົດລອງ 1:12-13) ແນະນຳວ່າມີ 6 ຢ່າງໃນຕອນນີ້. ໃຫ້ຄົນນື່ງອ່ານ. ຂຽນລົງໃນກະດານເປັນລຳດັບ ໃຫ້ນັກຮຽນເປັນຄົນບອກ.
ຖາມ: ນັກຮຽນຈະຄິດຢ່າງໃດຖ້າເກີດຢ່າງນີ້ແກ່ພວກເຮົາ?

6. ໃຫ້ຄົນນື່ງອ່ານ 1:14-20 ແບ່ງຫ້ອງໃຫ້ເປັນສອງສ່ວນ, ສ່ວນທີນື່ງ ໃຫ້ເນັ້ນໜັກໃສ່ຄຳສັ່ງສອນຂອງພຣະເຢຊູ ສ່ວນທີສອງ ໃຫ້ເນັ້ນໜັກໃສ່ໃນການຮຽກເອີ້ນສາວົກສີ່ຄົນແລກຂອງພຣະເຢຊູ
- ສາວົກມີຄວາມດີໃຈຫລາຍທີ່ໄດ້ຕິດຕາມພຣະເຢຊູ? ທ່ານຄິດຢ່າງໃດ?
- ຄົນພວກນີ້ປະລະສິ່ງຂອງທີ່ພວກເຂົາມີແລ້ວຕິດຕາມພຣະເຢຊູ? ມີໝາຍຄວາມວ່າຢ່າງໃດ?
- ແມ່ນຫຍັງແມ່ນສິ່ງແລກທີ່ພວກເຂົາຈະປ່ຽນແປງໃນການເດີນຕາມພຣະເຢຊູ?

## ການນຳໃຊ້ໃນຊີວິດປະຈຳວັນ

7. ເບິ່ງໃນເຈັ້ຽບົດຮຽນ ໃນຂໍ້ສິ່ງທີ່ຄວນນຳໄປກະທຳ ອ່ານດັງໆ ແລ້ວໃຫ້ນັກຮຽນອອກຄຳຄິດເຫັນໃນການຮັບຜິດຊອບ

8. ໃຫ້ນັກຮຽນພາກັນຕອບຄຳຖາມໃນເຈັ້ຍບົດຮຽນ ເພື່ອຈະນຳໄປໃຊ້ໃນຊີວິດປະຈຳວັນ.

9. ປິດດ້ວຍການອະທິຖານ. ອະທິຖານຂໍກຳລັງ, ອະທິຖານຂໍສະຕິປັນຍາ, ອະທິຖານຂໍຄວາມກ້າຫານ, ແລະອະທິຖານຂໍຄວາມຮັກທີ່ຈະໄດ້ສເນີພຣະເຢຊູໃຫ້ກັບໃຜຜູ້ນື່ງໃນອາທິດຈະມາເຖິງນີ້.

ບພ

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 3

## ຄວາມເຊື່ອຈະມີຄຸນຄ່າກໍຕໍ່ເມື່ອສະແດງອອກມາເທົ່ານັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 2:1-12

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 2:1-12

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມເຊື່ອຈຳເປັນຕ້ອງມີການກະທຳດ້ວຍການຮັບຜິດຊອບໃນສິດອຳນາດ

**ຄຳຖາມເພື່ອສຳຣວດ:** ທ່ານພໍໃຈໃນຜູ້ໃດ ໃນການປ່າວປະກາດເຣື່ອງຂອງພຣະເຢຊູນີ້ ?

**ຈຸດປະສົງຂອງບົດຮຽນ:** ຖ້າຈະຕັດສິນໃຈ, ຂ້າພະເຈົ້າຂໍຕັດສິນໃຈໄປທາງພຣະເຢຊູດີກ່ວາ

### ຄົ້ນຄວ້າ ພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າ ພວກເຂົາກໍແມ່ນພຣະສາຍາຂອງພຣະເຈົ້າ

### ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ທ່ານມີຄວາມຮູ້ສຶກຢ່າງໃດ ເມື່ອທ່ານອ່ານຫລືໄດ້ຍິນເຣື່ອງລາວທີ່ເປັນຫນ້າເຊື່ອຍາກ? ແມ່ນຫຍັງທີ່ເຮັດໃຫ້ເຮົາບໍ່ຢາກເຊື່ອ?

   ວັນນີ້ ພວກເຮົາຈະສຶກສານຳກັນເຖິງເຣື່ອງນຶ່ງທີ່ເກີດຂຶ້ນທີ່ກາເປນາອູມ "ການປິ່ນປົວຄົນເປ້ຽໃຫ້ຫາຍ"

### ນຳພາການສຶກສາພຣະຄັມພີ:

2. ໃຫ້ຄົນນຶ່ງອ່ານພຣະຄັມພີດັ່ງໆ ມາຣະໂກ 2:1-5 ແລ້ວໃຫ້ທຸກຄົນໃນຫ້ອງຕັ້ງໃຈຟັງວ່າມີຫຍັງເກີດຂຶ້ນ. ເບິ່ງໃນເຈັ້ຽບົດຮຽນ . "ຄວາມເຊື່ອຂອງເພື່ອນສະຫາຍ 4 ຄົນ" ແລະ "ເທິງຫລັງຄາ" ຫລັງຈາກສເນີອຸປກອນບົດຮຽນແລ້ວ ວາງຄຳຖາມ : ໃຫ້ຖາມເຖິງແຕ່ລະພວກໄປ

   - ✓ ພວກເພື່ອນສະຫາຍ 4 ຄົນ: ພວກນີ້ເຂົາເປັນເພື່ອນປະເພດໃດ?
     ເປັນຫຍັງເຂົາຈຶ່ງສະລະເວລາມາຫາມຄົນເປ້ຽນີ້ ?

- ✓ ພວກທີ່ຢືນເຝົ້າເບິ່ງເຫດການ: ເປັນຫຍັງຄົນພວກນີ້ຈຶ່ງຊ່ວຍຄົນເປັ້ຽຜູ້ນີ້? ພວກເຂົາເປັນຫຍັງຈຶ່ງມ້າງຫລັງຄາເຮືອນຂອງຄົນອື່ນຢ່າງນີ້? ພຣະເຢຊູຈະເຮັດຢ່າງໃດກັບຄົນທີ່ພວກເຂົາຢ່ອນລົງມານີ້?
- ✓ ສຳລັບຄົນເປັ້ຽເອງ: ຄົນເປັ້ຽຜູ້ນີ້ຍອມໃຫ້ຄົນຫາມຕົນເອງໄປບໍ່? ຄົນເປັ້ຽຈະມີແນວຄິດຢ່າງໃດໃນເຫດການຄັ້ງນີ້?

ໃຫ້ຄຣູ ພະຍາຍາມຊ່ອຍນັກຮຽນ, ໃຫ້ແນວຄິດທີ່ຈະຕອບ, ແລະໃຫ້ນັກຮຽນເຂົາໄດ້ເວົ້າແນໃສ່ການປິ່ນປົວນີ້.

3. ເຊີນໃຫ້ຄົນນຶ່ງອ່ານ ມາຣະໂກ 2:6-12 ໃຫ້ທຸກຄົນຕັ້ງໃຈຟັງ. ຫລັງຈາກນັ້ນຄຣູຈະໃຊ້ຄຳອະທິບາຍໃນເຈັ້ຽບົດຮຽນໃນຫົວຂໍ້ທີ່ວ່າ "ການປິ່ນປົວທີ່ບໍ່ລົງຮອຍກັນ" ເພື່ອໃຫ້ນັກຮຽນເຂົ້າໃຈດີ ເນັ້ນຫນັກບ່ອນທີ່ມີການຂັດແຍ້ງ "ພວກນັກທັມ" ພະຍາຍາມສັງຊອມການກະທຳຂອງພຣະເຢຊູ ເພື່ອຈະຫາຂໍ້ຜິດພາດ. ພວກເຂົາບໍ່ຮູ້ຈັກວ່າພຣະເຢຊູໄດ້ສິດອຳນາດທີ່ໃຫ້ອະພັຍໂທດ ແລະການປິ່ນປົວນີ້ມາຈາກໃສ.

ຄຳຖາມ: ເປັນຫຍັງພຣະເຢຊູຈຶ່ງໃຫ້ອະພັຍໂທດ ກ່ອນຈະປິ່ນປົວຄົນເປັ້ຽນັ້ນ?
ພຣະເຢຊູກ່າວຢ່າງໃດ ໃນການໃຫ້ອະພັຍໂທດນັ້ນ?

<u>ຫມູນໃຈໃນການກະທຳ</u>

4. ຂຽນລົງໃນກະດານ 3 ປໂຍກຕໍ່ໄປນີ້:

- ຄວາມເຊື່ອຂອງຫລາຍຄົນ ເຮັດໃຫ້ເກີດພລັງແລະອຳນາດ
- ຄົນທີ່ມີຄວາມເຊື່ອຕ້ອງມີການປະຕິບັດດ້ວຍ
- ຈົ່ງເຊື່ອວ່າພຣະເຢຊູມີສິດອຳນາດເຫນືອຮ່າງກາຍແລະຈິດວິນຍານດ້ວຍ.

ວາງຄຳຖາມ: ໃນທຸກວັນນີ້ ພວກເຮົາຍັງເຫັນສິ່ງເຫລົ່ານີ້ຫລືບໍ່? ຖ້າພວກເຮົາຫາກບໍ່ເຫັນທັງຫມົດ, ພວກເຮົາຍັງເຫັນອັນໃດ? ແມ່ນຫຍັງເກີດຂຶ້ນໃນສັງຄົມຂອງພວກເຮົາ?

5. ເພື່ອຈະເສີມຂຍາຍຂໍ້ພຣະທັມແລະຈະໄດ້ຮັບໄປປະຕິບັດນັ້ນ ໃຫ້ຄຣູຖາມຄຳຖາມໃນເຈັ້ຽບົດຮຽນ.

6. ກ່ອນຈະຈົບບົດຮຽນ ຖາມຄຳຖາມ ເຮັດຢ່າງໃດຄວາມເຊື່ອຈຶ່ງຈະມີອຳນາດແລະເຮັດໃຫ້ການປ່ຽນແປງເກີດຂຶ້ນ? ອະທິຖານ

*ບພ*

## ຄຳແນະນຳສຳຫລັບຄຣູສອນ

## ບົດຮຽນທີ 3

## ຈົ່ງອອກຈາກສິ່ງທີ່ຜູກມັດໄວ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 2:13-17, 23-3:6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 2:13-17, 23-3:6

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຢູ່ເຫນືອ ສາສນາ ຮີດຄອງ ປະເພນີຕ່າງໆ

**ຄຳຖາມເພື່ອສຳຣວດ:** ຈະເຮັດຢ່າງໃດຄຣິສຕຽນຈິ່ງຈະອອກຈາກສິ່ງທີ່ຜູກມັດ ສາສນາ ປະເພນີ ແລະຮີດຄອງຕ່າງໆ ໃຜຈະເປັນຜູ້ຕັດສິນໃຈ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍຈຸດສຳຄັນ ແລະເພື່ອນຳໄປໃຊ້ໃນຊີວິດປະຈຳວັນ ກ່ຽວກັບຮູ້ຈັກສັງເກດສາສນາ ແລະຮີດຄອງປະເພນີ.

### ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ເວົ້າຫຍໍ້ໆ ແນະນຳອຸປກອນການປ່ຽນແປງໃນເຈັ້ຽບົດຮຽນ, ເຣື່ອງການຍົກຍ້າຍຄອບຄົວໄປຢູ່ທີ່ອື່ນ. ແລະການທ້າທາຍໃນສະພາບການປັດຈຸບັນ.

2. ຖາມ: ບອກພວກເຮົາເບິ່ງດູວ່າແມ່ນຜູ້ໃດເປັນຕົ້ນຕຳຫລັບໃນສາສນາຄຣິດ ແມ່ນໃຜເປັນຜູ້ສ້າງວັນຊະບາໂຕ? ຖ້າໄດ້ຄຳຕອບວ່າພຣະເຢຊູ, ພຣະເຈົ້າ, ຫລືວ່າພຣະວິນຍານບໍຣິສຸດ ກໍແມ່ນຢັ້ງຢືນໄດ້ແລ້ວວ່າຮີດຄອງປະເພນີບໍ່ຄວນຈະຜູດມັດໄວ້.

### ສຶກສາພຣະຄັມພີ

3. ເຊີນຄົນນຶ່ງອ່ານພຣະຄັມພີ ມາຣະໂກ 2:13-17. ບັນລະຍາຍເຖິງການກິນເຂົ້າຮ່ວມກັບຄົນບາບ ໃນເຈັ້ຽບົດຮຽນໃຫ້ຊອກຫາສ່ວນປະກອບໃນຂໍ້ນີ້ເພື່ອນັກຮຽນຈະໄດ້ເຂົ້າໃຈດີຂຶ້ນ.
ໃນສັຕວັດທີ 21 ນີ້ ແມ່ນໃຜຄືຄົນເກັບພາສີ ທີ່ພວກເຮົາບໍ່ຄວນນັ່ງຮ່ວມໂຕະກິນເຂົ້ານຳ, ຫລືວ່າບໍ່ຢາກຄົບຫາສະມາຄົມເລີຍ.

ເປັນຫຍັງ ພວກເຮົາຈຶ່ງບໍ່ຢາກຮ່ວມໂຕະກັບເຂົາ?
ມີປະເພນີບໍ່? ຖ້າມີ ເຮັດຢ່າງໃດພວກເຮົາຈຶ່ງຈະເອົາອອກໄດ້?
ເຮົາຈະແກ້ໄຂຢ່າງໃດ ຖ້າຫາດມີຄົນໂຈມຕີເຮົາວ່າປະລະຮີດຄອງອັນເກົ່າ?

4. ຄົນນຶ່ງອ່ານ ມາຣະໂກ 2: 23-27. ອະທິບາຍຫລືເລົ່າເຣື່ອງເຫດການທີ່ເກີດຂຶ້ນ ໃນເຈັ້ຽບົດຣຽນໃນຫົວຂໍ້ທີ່ວ່າ "ທຳງານໃນວັນຊະບາໂຕ"

- ພຣະເຢຊູປະເຊີນກັບການໂຈມຕີຈາກພວກຟາຣີຊາຍຢ່າງໃດ?
- ພຣະເຢຊູຊົງຍົກເຣື່ອງຂອງດາວິດມາໃຫ້ພວກເຂົາເຫັນຄືແນວໃດ?
- ພຣະເຈົ້າຊົງມີພຣະປະສົງຢ່າງໃດ ຈະໃຊ້ວັນຊະບາໂຕຢ່າງໃດ?
- ປະເພນີເຫລົ່ານີ້ກີດກັ້ນການປ່າວປະກາດບໍ່ໃນທຸກວັນນີ້ບໍ່?

5. ໃຫ້ຄົນນຶ່ງອ່ານ ມາຣະໂກ 3:1-6 ອະທິບາຍເຖິງເຣື່ອງລາວຕ່າງໆ ໂດຍອີງໃສ່ເຈັ້ຽບົດຣຽນໃນຫົວຂໍ້ທີ່ວ່າ "ຊົງປົວຄົນມືລີບໃນວັນຊະບາໂຕ"
ໃນການປິ່ນປົວພະຍາດໃນວັນຊະບາໂຕເດ ພຣະເຢຊູປະເຊີນບັນຫາບໍ່?
ພຣະເຢຊູຊົງທ້າທາຍພວກເຂົາຢ່າງໃດ ເພື່ອເຂົາຈະໄດ້ປ່ຽນແນວຄິດ?
ຍັງມີຮີດຄອງອັນໃດແດ່ບໍ່ ທີ່ສະກັດກັ້ນພວກເຮົາໃນສມັຍດຽວນີ້?

6. ອ່ານຄຳຖາມໃນເຈັ້ຽບົດຣຽນ ໃຫ້ນັກຣຽນຕອບ. ໂດຍໃຫ້ນັກຣຽນຄິດເຖິງຕົນເອງ. ແລ້ວຖາມຄຳຖາມ 2-5 ລໍຖ້າໃຫ້ນັກຣຽນຕອບ

**<u>ຄຳຫນູນໃຈສຳຫລັບວັນນີ້:</u>**

7. ເປີດໂອກາດໃຫ້ນັກຣຽນສົນທະນາກັນ ວ່າຈະນຳບົດຣຽນນີ້ໄປໃຊ້ຢ່າງໃດໃນຊີວິດຂອງຕົນເອງ

8. ຫນູນໃຈໃຫ້ນັກຣຽນເຮັດບາງສິ່ງບາງຢ່າງເພື່ອພຣະເຈົ້າ ຊຶ່ງເປັນການອອກຈາກປະເພນີຢ່າງນຶ່ງ ເຂົ້າມາຫາປະເພນີອີກຢ່າງນຶ່ງ.

9. ອະທິຖານຂໍສະຕິປັນຍາຈາກພຣະເຈົ້າ ໃຫ້ອອກຈາກຮີດຄອງປະເພນີອັນບໍ່ສົມຄວນໄດ້.

*ປພ*

# ບົດແນະນຳຄຣູສອນ
# ບົດຮຽນທີ 4
# ຫລາຍເກີນກວ່າສິ່ງເຫັນເຕັມຕາ

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນນີ້: | ມາຣະໂກ 4:21-34 |
| ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: | ມາຣະໂກ 4:1-34 |
| ຈຸດສຳຄັນຂອງບົດຮຽນນີ້: | ອົງພຣະເຢຊູຊົງຄືຜູ້ໃດ ແລະຜົນປໂຍດຂອງການປະກາດຂອງພຣະອົງນັ້ນເປັນສິ່ງເກີນກວ່າສິ່ງທີ່ເຮົາເຫັນກັບຕາຫລາຍເທົ້າ. |
| ຄຳຖາມເພື່ອການສຳຣວດ: | ໃນເມື່ອພະລັງ ແລະວິທີຂອງໂລກເຫັນວ່າໃຊ້ໄດ້ຜົນດີ, ແລະມັນເປັນການສົມຄວນບໍ່ທີ່ເຮົາຈະເອົາຄວາມຫວັງ ແລະອານາຄົດໄວ້ໃນອົງພຣະເຢຊູ ແລະວິທີທາງຂອງພຣະອົງ? |
| ຈຸດປະສົງຂອງບົດຮຽນນີ້: | ເພື່ອຈະເອົາຄຳອຸປະມາຂອງພຣະເຢຊູມາໃຊ້ໃນຄຣິສຈັກ ແລະ ໃນຊີວິດປະຈຳວັນຂອງເຮົາ. |

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢັ້ງຢືນວ່າພຣະຄຳພີມີພະລັງແລະອຳນາດເພື່ອຈະເອົາມາປະກອບໃຊ້ໃນຊີວິດ ແລະການຮັບໃຊ້
- ແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເສີມສ້າງຄວາມຈະເຣີນໃຫຍ່ຂື້ນ ແລະຄວາມເຊື່ອທີ່ມີຊີວິດຊີວາ
- ເຂົ້າຮ່ວມເປັນຄອບຄົວຂອງພຣະເຈົ້າໃນການຕັດສິນໃຈ ແລະຮັບໃຊ້
- ຝຶກສອນຄົນອື່ນໃຫ້ເປັນຜູ້ນຳຮັບໃຊ້

## ບົດນຳ

ສາຍຕາຂອງເຮົານີ້ເຖິງຈະດີປານໃດກໍຕາມ ແຕ່ມັນກໍເບິ່ງຜິດພາດໄດ້. ສຳລັບຂ້າພະເຈົ້າແລ້ວເກີດ ມາກໍມີແສງຕາດີພໍສົມຄວນ ແຕ່ບາງຄັ້ງໂດຍສະເພາະແລ້ວເບິ່ງຕົວເລກມັກເຫັນກັບກັນ. ດັ່ງນັ້ນ, ເມື່ອໃຊ້ເລກບອກລົບໃນບັນຊີມັນກໍຜິດສເມີ. ເຊັ່ນກັນ, ພວກສາວົກຜູ້ຢູ່ກັບອົງພຣະເຢຊູ ພວກເພິ່ນໄດ້ເຫັນອົງພຣະເຢຊູແຕ່ລະວັນ ແຕ່ກໍຍັງບໍ່ຮູ້ຈັກວ່າ ພຣະອົງແມ່ນໃຜແທ້?

## ອະທິບາຍພຣະຄຳພີ
### ການເຂົ້າໃຈໃນເນື້ອເຣື່ອງ

ຫລັງຈາກອົງພຣເຢຊູໄດ້ປົວຄົນມືງ່ອຍ, ພຣະອົງໄດ້ອອກໄປທະເລ ຄາລີເລ ເພື່ອຈະປະກາດໃນຖິ່ນນັ້ນ. ມີຝູງຊົນເປັນຈຳນວນຫລວງຫລາຍໄດ້ມາຫາພຣະອົງ. ດັ່ງນັ້ນ, ພຣະອົງຈຶ່ງເຂົ້າເຮືອ. (ມາຣະໂກ 3:7-12).

ອົງພຣະເຢຊູໄດ້ເລືອກເອົາ 12 ຄົນ ທີ່ເອີ້ນວ່າ ສາວົກ ຜູ້ທີ່ເປັນຄົນຢູ່ໃກ້ຊິດພຣະອົງ. ພວກເຫລົ່ານີ້ແມ່ນຄົນທີ່ໄດ້ເດີນທາງ ແລະເປັນເພື່ອນຮ່ວມງານ ແລະຮຽນຮູ້ນຳພຣະອົງ. ພຣະເຢຊູໄດ້ສົ່ງເຂົາອອກໄປ, "ສົ່ງເຂົາອອກໄປປະກາດ ແລະຊົງປະທານໃຫ້ມີອຳນາດຂັບໄລ່ຜີອອກໄດ້" (3:13-19).

ໃນເມື່ອມີຝູງຊົນຕິດຕາມພຣະອົງໄປທຸກຫົນແຫ່ງ ຈຳເປັນພຣະອົງຕ້ອງໃຊ້ເຮືອເປັນບ່ອນສິດສອນ. ຄຳສອນ

ຂອງພຣະອົງທີ່ເວົ້າເຣື່ອງເມັດພືກ ຄືເໝືອນພຣະຄຳຂອງພຣະເຈົ້າໄດ້ຕົກລົງດິນຕາມບ່ອນຕ່າງໆ, ບາງຄົນໄດ້ຍິນບໍ່ຍອມຮັບເອົາ ແຕ່ບາງຄົນກໍຮັບເອົາດ້ວຍຄວາມຍິນດີ. ແນວໃດກໍຕາມໃນທີ່ສຸດຣາຊອານາຈັກຂອງພຣະເຈົ້າຕ້ອງເກີດດອກ ອອກຜົນຢ່າງແນ່ນອນຕາມວັນເວລາຂອງພຣະເຈົ້າ.

**ການແປພຣະຄັມພີ**

**ສ່ອງແສງສະວ່າງ** (4:21-25)

4:21. ຂໍ້ 10-12 ພຣະເຢຊູໄດ້ກ່າວວ່າຄຳອຸປະມານີ້ໃຊ້ປະກອບຄວາມຈິງໃນເຣື່ອງຟ້າສວັນ ແລະປົກບັງໄວ້ຈາກຄົນຜູ້ບໍ່ເຂົ້າໃຈ. ການສອນແນວນີ້ເຮັດໃຫ້ຜູ້ຟັງຄຶດພິຈາຣະນາໃຫ້ດີ.

ໂຄມໄຟໃນສມັຍນັ້ນໃຊ້ນ້ຳມັນໝາກກອກເທດ ແລະຍອງໄວ້ໃນບ່ອນສູງເພື່ອຈະໄດ້ສົ່ງແສງສວ່າງໄປໃນເຮືອນ. ດັ່ງນັ້ນ, ບໍ່ມີເຈົ້າຂອງເຮືອນໃດໃນເມື່ອໄຕ້ໂຄມໄຟແລ້ວ ເອົາສິ່ງຂອງມາບັງໄວ້.

4:22. ພຣະເຢຊູໄດ້ບອກວ່າຈຸດປະສົງຂອງໂຄມໄຟນັ້ນຄືເພື່ອຈະໄດ້ເປີດເຜີຍສິ່ງທີ່ຢູ່ໃນຄວາມມືດ ຫລືບັງໄວ້ໃຫ້ເຫັນ.

4:23. ພຣະອົງໄດ້ເອົາສິ່ງສອນນັ້ນເຂົ້າມາໃຊ້ໃນຊີວິດ. ຜູ້ໃດມີຫູໃຫ້ຜູ້ນັ້ນຟັງແລະເອົາໃຈໃສ່ໃນຄຳສັ່ງສອນຂອງພຣະອົງ. ຄວາມໝາຍນັ້ນບໍ່ແມ່ນແຕ່ຟັງຊື່ໆ ແຕ່ຕ້ອງເອົາສິ່ງໄດ້ຍິນນັ້ນເຂົ້າມາປະກອບໃຊ້ໃນຊີວິດ.

4:24-25. ພຣະເຢຊູໄດ້ເວົ້າເຖິງຄຳອຸປະມານັ້ນເຖິງສິ່ງທີ່ສັນຍາໄວ້ ແລະເປັນສິ່ງເຕືອນໃຫ້ລະວັງອີກດ້ວຍ. ພວກເຮົາຕ້ອງລະວັງກັບສິ່ງທີ່ຕົນເອງໄດ້ຍິນ. ຜູ້ທີ່ໄດ້ຍິນ, ເຂົ້າໃຈ, ແລະຮັບເອົາສິ່ງທີ່ອົງພຣະເຢຊູສອນ ຄົນນັ້ນຈະໄດ້ຮັບໃນຊີວິດເກີນຄວາມອະທິບາຍໄດ້.

ຄຳເຕືອນກໍຄືວ່າ ສິ່ງທີ່ບໍ່ໄດ້ຍິນ ແລະບໍ່ເຂົ້າໃຈໃນຄຳສອນຂອງພຣະເຢຊູແລ້ວ ຄົນເຫລົ່ານັ້ນກໍຈະກາຍເປັນຜູ້ບໍ່ເອົາໃຈໃສ່ໃນດ້ານວິນຍານຈິດ. ຄວາມຈິງ ແລະພຣະພອນຂອງພຣະເຈົ້າຕໍ່ຄົນນັ້ນກໍບໍ່ມີຄວາມໝາຍອັນໃດເລີຍ.

**ຄວາມຕັ້ງໃຈ** (4:26-29)

4:26. ພຣະເຢຊູໄດ້ເວົ້າເປັນຄຳອຸປະມາເພື່ອເວົ້າເຣື່ອງຟ້າສວັນ ຫລືອານາຈັກຂອງພຣະເຈົ້າ. ພຣະເຢຊູໄດ້ໃຊ້ຄຳເວົ້າກັບໃນດ້ານກະສິກັມ ເພາະຣາຊອານາຈັກຂອງພຣະເຈົ້າຕ້ອງຈະເຣີນໃຫຍ່ຂຶ້ນ ແລະພຣະອົງມີພຣະປະສົງຈະປົກຄອງຊີວິດຂອງເຮົາ.

4:27-28. ເມດພືດທີ່ຫວ່ານລົງຕາມດິນນັ້ນປົ່ງຮາກ, ແລະງອກໃຫຍ່ຂຶ້ນ. ສິ່ງນີ້ຈຳເປັນຕ້ອງໃຫຍ່ຂຶ້ນຢ່າງທັມມະຊາດໂດຍທີ່ຊາວນາອາດບໍ່ເຂົ້າໃຈ. ໃນເມື່ອຊາວນານັ້ນໄດ້ກະທຳສິ່ງສາລະພັດຢູ່ນັ້ນ ພືດນັ້ນກໍໄດ້ຈະເຣີນໃຫຍ່ຂຶ້ນ. ແນ່ນອນພວກຊາວນາບໍ່ເຂົ້າໃຈເຖິງວິທີການຂອງການເຕີບໃຫຍ່ ແຕ່ເຂົາຮູ້ວ່າມັນຕ້ອງໃຫຍ່. ດິນທີ່ຜະລິດໝາກຜົນເປັນລຳດັບ: ນຶ່ງ, ເປັນກ້ານ, ຕໍ່ມາເປັນຫົວ, ແລະທີ່ສຸດກໍເປັນໝາກຜົນ.

4:29. ໃນເມື່ອເຂົ້ານັ້ນສຸກແລ້ວ, ຜູ້ເປັນຊາວນາກໍເອົາກ່ຽວອອກໄປເກັບກ່ຽວ. ຜົນທີ່ໄດ້ຮັບນັ້ນແມ່ນສິ່ງທີ່ພຣະເຈົ້າປະທານໃຫ້. ການຈະເຣີນໃຫຍ່ຂຶ້ນຂອງຣາຊອານາຈັກຂອງພຣະເຈົ້ານັ້ນກໍແມ່ນພາຣະກິດຂອງພຣະເຈົ້າ. ພຣະເຈົ້າມີພຣະປະສົງໃຫ້ອານາຈັກຂອງພຣະອົງຂຍາຍອອກໄປຕາມທັມມະຊາດ. ເຊັ່ນກັນ ໃນເມື່ອພຣະຄຳຂອງພຣະເຈົ້າໄດ້ຕົກ ໃສ່ໃນຊີວິດຂອງມະນຸດຄົນນຶ່ງຄົນໃດແລ້ວ ມັນຍ່ອມເກີດຜົນສເມີ. ຜູ້ທີ່ອອກໄປເກັບກ່ຽວນັ້ນແມ່ນຜູ້ອາວຸດໂສໃນຄວາມເຊື່ອ.

**ເພີ້ມພູນ** (4:30-32)

4:30. ພຣະເຢຊູໄດ້ອະທິບາຍເຖິງອານາຈັກຂອງພຣະອົງໃສ່ທັມມະຊາດ. ນີ້ກໍໄດ້ຖືກຖາມຂຶ້ນເປັນສອງຄໍາຖາມ: ອານາຈັກຂອງພຣະເຈົ້າຄືອັນໃດ? ແລະຈະເອົາມັນມາໃຊ້ເປັນຄໍາອຸປະມາໄດ້ຢ່າງໃດ? ການສອນເປັນຄໍາອຸປະມານີ້ ຕາມປົກກະຕິແລ້ວໃຊ້ເປັນຄໍາຖາມ.

4:31. ອີກເທື່ອນຶ່ງ ອົງພຣະເຢຊູໄດ້ໃຊ້ແກ່ນຜັກກາດທີ່ສາມາດໃຫຍ່ຂື້ນເປັນຕົ້ນໄມ້ໄດ້. ແກ່ນຜັກກາດນີ້ອາດຈະບໍ່ແມ່ນ ສິ່ງນ້ອຍທີ່ສຸດ ແຕ່ມັນເປັນສິ່ງທີ່ປະກອບໃຊ້ເປັນຄໍາສຸພາສິດເກັບສິ່ງນ້ອຍທີ່ສຸດ.

4:32. ແກ່ນຜັກກາດເປັນສິ່ງນ້ອຍໆເວລາປູກ, ແຕ່ເມື່ອເວລາມັນໃຫຍ່ຂື້ນແລ້ວ ມັນກາຍເປັນຕົ້ນໄມ້ສູງເຖິງ 12 ຟິດ ທີ່ຝູງນົກສາມາດມາເຮັດຮັງໃສ່ໄດ້. ຄວາມໝາຍຂອງຄໍາອຸປະມານີ້ແມ່ນ ການຈະເຣີນໃຫຍ່ຂື້ນຂອງຣາຊອານາຈັກ ຂອງພຣະເຈົ້າ ເວລາເລີ້ມຕົ້ນນັ້ນນ້ອຍໆ.

**ການແປພຣະຄັມພີ** (4:33-44)

4:33. ມາຣະໂກໄດ້ກ່າວວ່າ ເພິ່ນບໍ່ໄດ້ບັນທຶກເອົາຄໍາອຸປະມາຂອງອົງພຣະເຢຊູທຸກອັນໄວ້. ແຕ່ຄໍາອຸປະມາທີ່ໃຊ້ໃນ ປື້ມນີ້ກໍຖືກກັບສະພາບການ ແລະຈຸດປະສົງດີ.

ພຣະເຢຊູໃຊ້ຄໍາອຸປະມາເພື່ອສອນ "ຄໍາເວົ້າ" ແມ່ນ "ຄໍາເວົ້າ" ຂອງພຣະເຈົ້າໃນ (1:14) ເຣື່ອງນີ້ໄດ້ເວົ້າເຖິງຄວາມ ຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ ໃນທີ່ສຸດພຣະອົງກໍກາຍມາເປັນເນື້ອໜັງ ແລະອາສັຍຢູ່ໃນທ້າມກາງພວກເຮົາ.

ພຣະເຢຊູໄດ້ສອນຄົນ "ຫລາຍເທົ່າທີ່ພວກເຂົາມີຄວາມເຂົ້າໃຈໄດ້" ໝາຍຄວາມວ່າພຣະເຢຊູບໍ່ໄດ້ສອນເກີນຄວາມສາ ມາດຂອງພວກເຂົາ. ພຣະອົງສອນໃນຂັ້ນລໍາດັບທີ່ພວກເຂົາມີຄວາມສາມາດ.

4:34. ວິທີສອນຂອງອົງພຣະເຢຊູໃຊ້ແມ່ນຄໍາອຸປະມາ. ໝາຍຄວາມວ່າຄວາມປຽບທຽບ ຄືພຣະອົງໄດ້ຍົກເອົາສິ່ງ ເກີດຂື້ນໃນຊີວິດ ແລະອົງມາທຽບກັບທັມມະຊາດໃນການປູກຝັງ. ສິ່ງເຫລົ່ານີ້ຜູ້ຟັງໃນສມັຍຂອງພຣະເຢຊູ ພວກເຂົາ ເຈົ້າສົນໃຈ ແລະສາມາດເຂົ້າໃຈໄດ້ດີ.

**ແຜນການສອນ**

**ກິຈການແຜນການສອນ**

1. ກ່ອນສອນໃຫ້ຊອກເອົາຄົນອື່ນໃນຄຣິສຕະຈັກຜູ້ມີຄວາມສາມາດເວົ້າຄໍາພະຍານສັ້ນເຖິງເຣື່ອງທີ່ພຣະເຈົ້າໄດ້ຊ່ອຍ ແກ້ ບັນຫາທີ່ເຫັນວ່າໝົດທາງທີ່ຈະແກ້, ຕົວຢ່າງ: ປິ່ວພະຍາດໃຫ້ດີ, ແກ້ບັນຫາດ້ານການເງິນ, ຊອກຫາການ, ພົ້ນ ຈາກພັຍອັນຕະລາຍ ແລະອື່ນໆ.

2. ເຊີນຄົນນຶ່ງຄົນໃດອ່ານຄໍາແນະນໍາຈາກບົດຮຽນນີ້ວ່າ, "ພຣະເຢຊູແມ່ນໃຜ?"

3. ອ່ານເຣື່ອງ "ໃຫ້ເຂົ້າໃຈໃນເນື້ອເຣື່ອງ" ໃຫ້ສລູບປື້ມ ມາຣະໂກ 3:7-4:20. ຢ່າລືມໃຊ້ຄໍາເວົ້າ <u>ຄໍາອຸປະມາ</u>.

*ບວ*

## <u>ແນະນຳຄູສອນ</u>

## <u>ບົດຮຽນທີ 5</u>

## <u>ອົງພຣະເຢຊູແລະສະພາບຄວາມໝົດຫວັງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 4:35-5:43

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ມາຣະໂກ 4:35-5:43

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ອົງພຣະເຢຊູມີຈຸດພິເສດສາມາດຊ່ອຍຄົນຢູ່ໃນສະພາບທີ່ເຫັນວ່າ ໝົດຫວັງໄດ້.

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະເຮັດຢ່າງໃດໃນເມື່ອເຮົາຢູ່ສະພາບໝົດຫວັງ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຮູ້ຈັກສິ່ງທີ່ເກີດຂື້ນໃນສະພາບການໃນບົດນີ້ ແລະເພື່ອຈະເອົາມາປະກອບໃຊ້ໃນຊີວິດກັບສິ່ງທີ່ພຣະເຢຊູເຮັດແຕ່ລະຄັ້ງ

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ຢັ້ງຢືນວ່າພຣະຄັມພີມີພຣະລັງແລະອຳນາດເພື່ອຈະເອົາມາປະກອບໃຊ້ໃນຊີວິດ ແລະການຮັບໃຊ້
- ແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເສີມສ້າງຄວາມຈະເຣີນໃຫຍ່ຂື້ນ ແລະຄວາມເຊື່ອທີ່ມີຊີວິດຊີວາ
- ເຂົ້າຮ່ວມເປັນຄອບຄົວຂອງພຣະເຈົ້າໃນການຕັດສິນໃຈ ແລະຮັບໃຊ້
- ໃຫ້ເຫັນຄຸນຄ່າຂອງຊີວິດແຕ່ລະຄົນທີ່ໄດ້ຖືກສ້າງຂື້ນຕາມພຣະລັກສະນະຂອງພຣະເຈົ້າ
- ຊັກຊວນໃຫ້ມີຄອບຄົວທີ່ສົມບູນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູໂດຍການຊ່ອຍເຫລື່ອຄົນອື່ນດ້ານຮ່າງກາຍ, ທາງຈິດໃຈ, ແລະທາງຄວາມຮູ້ສຶກ.

### <u>ບົດນຳ</u>

ລົມພະຍຸໄດ້ເຂົ້າມາສູ່ຊີວິດຄົນໃນທຸກໆຮູບແບບ ແລະມັນສາມາດປ່ຽນແປງສະພາບການຂອງທຸກໆຄົນໄດ້. ອົງພຣະເຢຊູເປັນຄຳຕອບໃນເວລາສຸກເສີນ ແລະເຮັດໃຫ້ລົມພະຍຸໃນຊີວິດນັ້ນສງົບລົງໄດ້.

ພວກເຮົາທຸກໆຄົນໄດ້ປະເຊີນກັບລົມພະຍຸໃນຊີວິດ. ພວກເຮົາໄດ້ປະເຊີນດ້ວຍຄວາມລຳບາກ ພວກເຮົາຕ້ອງການຄວາມຊ່ອຍເຫລືອ ແລະເວລານັ້ນຢາກໃຫ້ຜູ້ນຳສັນຕິສຸກໄດ້ເດີນເຂົ້າມາຊ່ອຍ. ບົດຮຽນນີ້ບໍ່ໄດ້ສອນເຖິງການທີ່ພຣະເຈົ້າໄດ້ປົກປ້ອງຮັກສາພວກເຮົາໄວ້<u>ຈາກ</u> ລົມພະຍຸ ແຕ່ຍັງເປັນບົດຮຽນທີ່ພຣະເຈົ້າຮັກສາພວກເຮົາ<u>ໃນ</u>ລົມພະຍຸ.

### <u>ອະທິບາຍພຣະຄັມພີ</u>

### ການເຂົ້າໃຈໃນເນື້ອເຣື່ອງ

ໝົດຄວາມຫວັງ. ບໍ່ມີຫຍັງເຮັດໃຫ້ມະນຸດຫລາຍກວ່າການທີ່ໝົດຄວາມຫວັງໃນຊີວິດ. ໃຫ້ຈຳໄວ້ວ່າອົງພຣະເຢຊູ ສາມາດຊ່ອຍຜູ້ໝົດຄວາມຫວັງໄດ້. ໃນສະພາບທີ່ເຫັນວ່າບໍ່ມີຫວັງນັ້ນ ພຣະເຢຊູມີພະລັງຢູ່ເໜືອອຳນາດຂອງ

ທັມມະຊາດ ແລະມະນຸດຊາດ.

ຂ່າວປະເສີດໃນປື້ມມາຣະໂກທີ່ເວົ້າເຣື້ອງຄຳອຸປະມານັ້ນ ແລະຕໍ່ມາໄດ້ຍົກເອົາເຣື່ອງການອັສຈັນທີ່ອົງພຣະເຢຊູໄດ້ກະທຳ. ໃນຕອນນີ້ທ່ານມາຣະໂກໄດ້ບັນທຶກການອັສຈັນສີ່ຢ່າງໄວ້. ການທີ່ພຣະເຢຊູກະທຳການອັສຈັນກໍເພາະເປັນການຕອບສນອງຄວາມຕ້ອງການຂອງມະນຸດເຮົາ.

ມາຣະໂກໄດ້ສະແດງເຖິງບຸກຄະລິກລັກສະນະຂອງອົງພຣະເຢຊູຈາກສິ່ງທີ່ພຣະອົງໄດ້ກະທຳ. ໃນປື້ມນີ້ການກະທຳຂອງພຣະເຢຊູເປັນສິ່ງສຳຄັນຫລາຍ. ພຣະເຢຊູໄດ້ເປັນຫ່ວງຕໍ່ຄວາມຕ້ອງການຂອງມະ ນຸດເລີ້ມຈາກຢ້ານກົວຈາກພະລັງຂອງພັຍທັມມະຊາດທີ່ບໍ່ມີຜູ້ໃດຫ້າມມັນໄດ້ ຈົນເຖິງການຕາຍ. ພຣະເຢຊູ ມີຄວາມເມດຕາສົງສານມະນຸດເຮົາ. ດັ່ງນັ້ນ, ພຣະອົງຈິ່ງກະທຳການອັສຈັນຕ່າງໆເພື່ອຈະນຳເອົາຄວາມ ຫວັງ, ການປິ່ວພະຍາດໃຫ້ດີ ແລະສະພາບໝົດຫວັງນັ້ນ ໃຫ້ມີຄວາມຫວັງໃໝ່ເກີດຂື້ນ.

## ການແປພຣະຄັມພີ

### ຄວາມຢ້ານກົວ (4:35-41)

4:35-36. ມາຣະໂກ 4:1. ພຣະເຢຊູໄດ້ເຂົ້າໄປໃນເຮືອເພື່ອສອນຝູງຊົນຜູ້ທີ່ເຂົ້າມາຫາພຣະອົງໃນແຄມທະ ເລຄາລີເລ. ໃນຕອນແລງມາພຣະອົງໄດ້ສັ່ງໃຫ້ພວກສາວົກຂີ່ເຮືອຂ້າມໄປຝາກນັ້ນ. ພຣະອົງເຮັດຢ່າງນີ້ ອາດຈະແມ່ນເພື່ອຫລີກໜີຫລືພຣະອົງຕ້ອງການປະກາດໃນຝາກນັ້ນ. ແຕ່ຢ່າງໃດກໍດີ ກໍຍັງມີຝູງຊົນບາງ ຄົນຂີ່ເຮືອຕິດຕາມພຣະອົງໄປ.

4:37-38. ອາດຈະແມ່ນເຮັດວຽກຫລາຍ ແລະເມື່ອຍ ພຣະເຢຊູໄດ້ນອນໃນພື້ນເຮືອ. ໃນທັນໃດນັ້ນ ກໍເກີດ ມີລົມພະຍຸພັດເຮືອຢ່າງໜັກ ຈົນເຮືອເກືອບຫລົ້ມ. ການທີ່ເຮືອພັດໄປມານັ້ນເປັນຂອງທັມມະດາໃນທະເລຄາລີເລ ເພາະໃນທິດຕາເວັນອອກກໍມີແຕ່ພູ ດັ່ງນັ້ນ, ລົມກໍມັກພັດມາຈາກຮ່ອມພູເຫລົ່ານັ້ນສເມີແລະເຮັດໃຫ້ນ້ຳກາຍເປັນຟອງໃຫຍ່ ແລະເປັນອັນຕະລາຍແກ່ຜູ້ເດີນທາງເຮືອ.

ໃນເມື່ອລົມພະຍຸພັດມານັ້ນ ອົງພຣະເຢຊູບໍ່ສະເທືອນຫຍັງເລີຍ ນອນຫລັບສະບາຍ. ແຕ່ພວກສາວົກທັງຫລາຍພາກັນຕົກໃຈທີ່ສຸດ. ພວກເຂົາກໍໄດ້ປຸກໃຫ້ພຣະເຢຊູລຸກຂື້ນແລະກ່າວວ່າ, "ພຣະອາຈານ, ພຣະອົງບໍ່ເປັນຫ່ວງບໍ່ວ່າພວກຂ້ານ້ອຍຈະຈົມນ້ຳຕາຍ?" ການຢ້ານຂອງພວກສາວົກໄດ້ກາຍເປັນການຕ້ອງຕິຕໍ່ອົງພຣະເຢຊູ. "ພຣະອາຈານ" ເປັນຄຳເວົ້າທີ່ໃຊ້ເອີ້ນຊື່ພຣະເຢຊູ ເພາະພຣະພຣະບຸດອົງດຽວຂອງພຣະເຈົ້າ. ທີ່ສຸດພວກສາ ວົກທັງຫລາຍກໍໄດ້ເຂົ້າໃຈເຖິງເຣື່ອງນີ້ດີ.

### ຫລົບໜີໄປ (5:1-20)

5:1-5. ການປະກາດຂອງອົງພຣະເຢຊູບໍ່ໄດ້ຢູ່ບ່ອນດຽວ. ພຣະເຢຊູໄດ້ຂ້າມນ້ຳໄປອີກບ່ອນນຶ່ງຂອງທະເລ ຄາລີເລທີ່ມີຊື່ວ່າ "ເຂດແດນຊາວເຄຣະຊາ." ເຂດນີ້ເປັນບ່ອນຢູ່ຂອງພວກຕ່າງຊາດພາກັນອາສັຍຢູ່. ເວລາອອກຈາກເຮືອແລ້ວພຣະອົງໄດ້ພົບຄົນທີ່ມີຜີຊົ່ວຮ້າຍເຂົ້າສິງຢູ່. ຊາຍບ້າຜູ້ນີ້ອາສັຍຢູ່ໃນຜີປ່າຊ້າ ບໍ່ໄດ້ຢູ່ກັບຝູງຊົນໃດເລີຍ. ລາວມີແຮງຫລາຍເພາະບໍ່ມີຜູ້ໃດຜູກມັດລາວໄວ້ໄດ້. ທຸກໆຄືນຊາຍຄົນນີ້ໄດ້ຮ້ອງຂື້ນ ເປັນສຽງໜ້າຢ້ານ. ລາວໄດ້ເອົາໝາກຫີນມາປາດຕາມຕົນຕົວໃຫ້ເລືອດໄຫລອອກມາ ອາດຈະເປັນການທີ່ ຢາກໃຫ້ຜີຮ້າຍອອກຈາກລາວກໍໄດ້. ຊາຍຄົນນີ້ໄດ້ຖືກລົມພະຍຸຮ້າຍພັດໄປມາເໝືອນໃນທະເລ.

5:6-8. ໃນເມື່ອຊາຍທີ່ມີຜີຮ້າຍເຂົ້າສິງເຫັນພຣະເຢຊູ ລາວເຂົ້າມາຄຸເຂົ່າລົງຕໍ່ໜ້າພຣະອົງ. ກ່າວວ່າ, "ເຢຊູບຸດຂອງພຣະເຈົ້າຜູ້ສູງສຸດເອີຍ" ລາວໄດ້ເວົ້າກັບພຣະເຢຊູເປັນສຽງດັງວ່າ ພຣະເຢຊູຕ້ອງການຫຍັງ ຈາກລາວ. ລາວຮ້ອງ

ຂໍບໍ່ໃຫ້ທໍຣະມານລາວ. ໃນຫລາຍໆຕອນ ຜີຮ້າຍໄດ້ຮູ້ວ່າພຣະເຢຊູເປັນໃຜກັນແທ້ (1:24-34; 3:11). ພຣະອົງເປັນພຣະບຸດຂອງພຣະເຈົ້າ ແລະຮູ້ວ່າພຣະອົງມີອຳນາດເໜືອຜີຮ້າຍ. ພຣະເຢຊູໄດ້ຕ້ອງຕໍ່ສູ້ຜີເໝືອນພຣະອົງຕ້ອງຕໍ່ສູ້ລົມພະຍຸໃນທະເລ. ພຣະອົງໄດ້ສັ່ງໃຫ້ຜີຮ້າຍອອກຈາກຊາຍ ຄົນນັ້ນ.

5:9-10. ຄົນສມັຍໂບຮານກ່າວວ່າ ຖ້າທ່ານຮູ້ຈັກຊື່ຂອງຄົນນຶ່ງຄົນໃດ ທ່ານມີອຳນາດບັງຄັບຄົນນັ້ນ. ພຣະເຢຊູໄດ້ຖາມຊື່ຂອງຜີຊົ່ວຮ້າຍ. ມັນໄດ້ຕອບວ່າ, "ກອງທັບ" ທະຫານຂອງໂຣມກອງທັບນຶ່ງມີປະ ມານ 6,000 ຄົນ. ນັ້ນໝາຍຄວາມວ່າ ຄົນນັ້ນມີຜີຊົ່ວຮ້າຍເຂົ້າສິງຢູ່ 6,000 ໂຕ. ຫລັງຈາກໄດ້ບອກຊື່ ຂອງມັນໃຫ້ພຣະເຢຊູຮູ້ແລ້ວຜີນັ້ນໄດ້ຮ້ອງຂໍບໍ່ໃຫ້ພຣະເຢຊູໄລ່ມັນອອກຈາກຖິ່ນນັ້ນ.

5:11-13. ໃກ້ຖິ່ນນັ້ນມີຝູງໝູຈຳນວນໃຫຍ່ ໃນເມື່ອໄດ້ທູນຂໍອະນຸຍາດຈາກອົງພຣະເຢຊູແລ້ວ ພຣະອົງໄດ້ສົ່ງມັນໄປເຂົ້າຝູງໝູ. ດັ່ງນັ້ນ, ເມື່ອມັນອອກຈາກຊາຍຄົນນັ້ນແລ້ວ ມັນກໍເລີຍໄປເຂົ້າຝູງໝູ 2000 ໂຕ ທັນທີ ແລະໝູເຫລົ່ານັ້ນກໍພາກັນໂຕນນ້ຳຕາຍໝົດ.

5:14:15. ສ່ວນຜູ້ຮັກສາຝູງໝູກໍໄດ້ແລ່ນອອກໄປບອກຄົນອື່ນເຖິງສິ່ງທີ່ເກີດຂຶ້ນນັ້ນ. ຄົນທີ່ໄດ້ຍິນກໍພາກັນອອກໄປເບິ່ງໃນບ່ອນເກີດເຫດນັ້ນ. ໃນເມື່ອເຂົາໄປເຖິງບ່ອນນັ້ນແລ້ວ ພວກເຂົາໄດ້ພົບເຫັນຊາຍຄົນທີ່ມີຜີ ເຂົ້າສິງໄດ້ນັ່ງລົງຢ່າງເປັນລະບຽບ. ລາວໄດ້ນຸ່ງເຄື່ອງຈົບງາມດີ ແລະຍິ່ງໄປກວ່ານັ້ນ ລາວກໍເປັນຄົນສະ ຕິດີເປັນປົກກະຕິດີ.

5:16-17. ເຫດການເຫລົ່ານີ້ເປັນເຫດໃຫ້ຄົນທັງຫລາຍມີຄວາມຢ້ານກົວ. ພວກເຂົາເລີຍພາກັນຮ້ອງຂໍໃຫ້ອົງພຣະເຢຊູອອກໜີໄປຈາກທີ່ນັ້ນ. ຖ້າວ່າພຣະອົງມີອຳນາດໃຫຍ່ປານນັ້ນ ພຣະອົງອາດເຮັດຫຍັງໄດ້ອີກ ບໍ່?

5:18-19. ພຣະອົງກໍໄດ້ສະເດັດອອກຈາກທີ່ນັ້ນໄປ, ສ່ວນຄົນທີ່ຜີຮ້າຍເຂົ້າສິງນັ້ນຮ້ອງຂໍໃຫ້ລາວຕິດຕາມພຣະອົງໄປ. ພຣະເຢຊູບໍ່ອະນຸຍາດ ແລະພຣະອົງໄດ້ບອກໃຫ້ລາວເຮັດບາງຢ່າງຄື ພຣະອົງບອກລາວໃຫ້ ກັບໄປບ້ານ ໄປບອກຄົນທີ່ເຄີຍຮູ້ຈັກລາວວ່າພຣະເຢຊູໄດ້ຊ່ອຍຫຍັງລາວແດ່. ລາວຈຶ່ງໄປບອກຕໍ່ທຸກໆຄົນ ວ່າພຣະເຢຊູໄດ້ຊ່ອຍລາວໃຫ້ຫລຸດພົ້ນຈາກອຳນາດຂອງຜີມານ ແລະພຣະອົງມີຄວາມເມດຕາກະຣຸນາຕໍ່ ລາວຢ່າງລົ້ນເຫລືອ.

5:20. ເດຄາໂປລີ ແມ່ນສິບເມືອງຂອງພວກຕ່າງຊາດອາສັຍຢູ່ ເມືອງເຫລົ່ານີ້ຕັ້ງຢູ່ທາງທິດຕາເວັນອອກຂອງທະເລຄາລີເລ. ຊາຍຄົນນີ້ໄດ້ໄປບອກຄົນໃນທຸກໆຫົວເມືອງໃນສິ່ງທີ່ພຣະເຢຊູໄດ້ເຮັດຕໍ່ລາວ.

**ເໜື່ອຍອ່ອນ** (5:21-34)

5:21-24. ກັບໄປຍັງເມືອງຄາລີເລ, ພຣະອົງໄດ້ພົບກັບຝູງຊົນເປັນຈຳນວນຫລາຍ. ໃນຈຳນວນນີ້ມີຜູ້ນຶ່ງ ມີຊື່ວ່າຢາຣີໂອຜູ້ປົກຄອງພຣະວິຫານ. ລາວໄດ້ທູນຂໍກັບພຣະເຢຊູໃຫ້ຊ່ອຍລູກລາວຜູ້ກຳລັງປ່ວຍໃກ້ຈະ ຕາຍແລ້ວ. ຢາຣີໂອອາດໄດ້ຍິນເຣື່ອງພຣະເຢຊູໄດ້ກະທຳໃນເມືອງຄາລີເລ. ລາວເຊື່ອວ່າອົງພຣະເຢຊູ ສາມາດຊ່ອຍໃຫ້ລູກສາວດີເປັນປົກກະຕິໄດ້. ອົງພຣະເຢຊູກໍມີຄວາມຍິນດີອອກໄປນຳລາວ ແລະມີຄົນ ອື່ນໆຕິດຕາມໄປດ້ວຍ.

5:25-29. ໃນຝູງຊົນນັ້ນມີຍິງຄົນນຶ່ງເປັນພະຍາດເລືອດຕົກເຖິງ 12 ປີ. ລາວໄດ້ໃຊ້ເງິນຄຳປິ່ນປົວ ຫລາຍ. ໃນທີ່ສຸດລາວກໍໝົດເງິນຄຳທີ່ໃຊ້ປົວຕໍ່ໄປ. ແທນທີ່ຈະດີ ແຕ່ສະພາບການຂອງລາວຮ້າຍແຮງຂຶ້ນແຕ່ລະວັນ. ຍິງນີ້ຕາມສັງຄົມແລ້ວເປັນຄົນບໍ່ສະອາດ. ຍິງນີ້ໄດ້ຍິນເຣື່ອງພຣະເຢຊູ. ລາວຄຶດໃນໃຈວ່າຖ້າ ລາວພຽງແຕ່ກາຍໄປທາງຫລັງແລ້ວບາຍຜ້າຊັ້ນນອກຂອງພຣະເຢຊູຜູ້ມີອຳນາດ ພະຍາດຂອງຕົນຄົງດີ. ທີ່ສຸດລາວກໍໄດ້ເຮັດດັ່ງຄຶດໄວ້. ໃນເມື່ອລາວໄດ້

ຈັບບາຍຜ້າຊັ້ນນອກ ລາວຮູ້ສຶກວ່າເລືອດໄດ້ຢຸດໃນທັນທີ.

5:30:31. ພຣະເຢຊູໄດ້ຖາມວ່າແມ່ນໃຜບາຍພຣະອົງ. ພຣະອົງເຫັນວ່າຣິດເດດໄດ້ອອກຈາກພຣະອົງແລ້ວ. ພວກສາວົກພາກັນເວົ້າວ່າ ມີຝູງຊົນໜ້າແໜ້ນເປັນດ້ວຍເຫດໃດພຣະອົງຈຶ່ງຖາມດັ່ງນັ້ນ.

5:32-33. ພຣະເຢຊູຊອກຫາຜູ້ບາຍເສື້ອພຣະອົງ. ມີຍິງຄົນນຶ່ງເຂົ້າມາຫາພຣະອົງດ້ວຍຄວາມຢ້ານ ແລ້ວສາລະພາບວ່າລາວໄດ້ເປັນຜູ້ບາຍເສື້ອພຣະອົງ ແລະພຣະເຢຊູໄດ້ບອກລາວວ່າ ຄວາມເຊື່ອຂອງລາວເຮັດ ໃຫ້ລາວດີພະຍາດ. ພຣະອົງບອກໃຫ້ລາວອອກໄປເປັນສຸກເຖີດ.

## ບໍ່ມີປໂຍດ (5:35-43)

5:35-36. ໃນຂະນະທີ່ພຣະເຢຊູຍັງຊົງກ່າວກັບຍິງນັ້ນ ມີຄົນມາຈາກເຮືອນນາຍໂຮງທັມມະເທສນາບອກ ວ່າບໍ່ມີປໂຍດຫຍັງດອກທີ່ພຣະເຢຊູຈະຕ້ອງໄປ ເພາະລູກສາວຂອງນາຍໂຮງທັມມະເທສນານັ້ນຕາຍແລ້ວ. ຢາອີໂຣບໍ່ຈຳເປັນລົບກວນອົງພຣະເຢຊູອີກຕໍ່ໄປ. ສ່ວນພຣະເຢຊູບໍ່ໄດ້ເອົາຫົວຊາຕໍ່ຄຳລາຍງານ ນັ້ນ. ພຣະອົງໄດ້ບອກ ຢາອີໂຣ ໃຫ້ມີຄວາມເຊື່ອແລະບໍ່ໃຫ້ຢ້ານ. ອີກຄັ້ງນຶ່ງ ພຣະເຢຊູໄດ້ປຽບທຽບຄວາມ ຢ້ານກັບຄວາມເຊື່ອ.

5:37-39. ພຣະອົງໄດ້ເອົາ ເປໂຕ, ຢາໂກໂບ ແລະໂຢຮັນໄປເຮືອນ ຢາອີໂຣນຳ. ພວກເຂົາໄດ້ເຫັນຄົນທັງຫລາຍພາກັນຮ້ອງໄຫ້ເສັຽໃຈຢູ່ເພາະລູກສາວຂອງ ຢາອີໂຣ ໄດ້ຕາຍແລ້ວ. ອົງພຣະເຢຊູໄດ້ຖາມວ່າ ເປັນຫຍັງຈຶ່ງມີຄວາມໂສກເສົ້າຮ້ອງໄຫ້ເກີດຂ ້ົນ. ພຣະອົງກ່າວວ່າຍິງຄົນນັ້ນຍັງບໍ່ຕາຍ, ນາງພຽງນອກຫລັບ ຊື່ໆ. ພວກເຂົາພາກັນຫົວຂວັນເພາະເຂົາຮູ້ວ່າການຕາຍໄດ້ເກີດຂຶ້ນກັບນາງສາວຄົນນັ້ນ.

5:41-43. ພຣະອົງບອກໃຫ້ຄົນທັງຫລາຍອອກໄປຈາກຫ້ອງ ເວັ້ນແຕ່ຜູ້ເປັນພໍ່ແມ່ແລະສາວົກທີ່ໄປນຳພຣະອົງ. ພຣະເຢຊູເຂົ້າໄປຫານາງຈັບມືນາງໃຫ້ລຸກຂຶ້ນ ແລະພຣະອົງສັ່ງໃຫ້ນາງລຸກຂຶ້ນ. ໃນທັນໃດນັ້ນ ນາງບໍ່ໄດ້ພຽງລຸກຂຶ້ນ ແຕ່ນາງໄດ້ຍ່າງໄປມາໃນຫ້ອງເພື່ອໃຫ້ຄົນອື່ນຮູ້ວ່ານາງມີຊີວິດ ພຣະອົງບອກໃຫ້ ນາງກິນອາຫານ. ພຣະເຢຊູໄດ້ສັ່ງໃຫ້ຄົນບໍ່ໃຫ້ບອກຕໍ່ໄປວ່າພຣະອົງຊົງມີອຳນາດເຮັດໃຫ້ຄົນຕາຍຄືນມາ ໄດ້.

## <u>ແຜນການສອນ</u>

## ກິຈກຳແຜ່ນການສອນ

1. ກ່ອນເວລາສອນ, ໃຫ້ຂຽນໃສ່ກະດານ "ຄວາມຢ້ານ ຫລື ຄວາມເຊື່ອ" ຖ້າເປັນໄປໄດ້ໃຫ້ຊອກເອົາບົດ ເພງທີ່ເວົ້າເຖິງສິ່ງນີ້.

2. ແຈກເຈັ້ຽ ແລະສໍດຳໃຫ້ຄົນໃນຫ້ອງ ບອກໃຫ້ເຂົາເຈົ້າຂຽນ ຄວາມຢ້ານ ຫລື ຄວາມເຊື່ອໃສ່ທາງເທິງ ແລະ ໃຫ້ໃຊ້ໃນຫ້ອງວັນນີ້ ໃນເມື່ອເຂົາເຈົ້າໄດ້ຍິນຄົນກ່າວເຖິງສອງເຣື່ອງນີ້.

3. ບອກໃຫ້ຄົນອື່ນອ່ານຄຳແນະນຳຈາກ <u>ບົດແນະນຳ</u>, ວ່າພຣະເຢຊູເປັນອົງພິເສດທີ່ຈະຊ່ອຍຄົນຜູ້ຢູ່ໃນສະພາບໝົດຫວັງໃນຊີວິດ ໃຫ້ມີຄວາມຫວັງໃໝ່ໄດ້. ຮ້ອງຂໍໃຫ້ຜູ້ໃດຜູ້ນຶ່ງອ້ອນວອນສຳລັບການສຶກສາວັນນີ້.

*ບວ*

# ແນະນຳຄູສອນ
# ບົດຮຽນທີ 6
# ຄວາມສະອາດບໍ່ແມ່ນການກາຍເປັນພຣະເຈົ້າໄດ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 7:1-23

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມາຣະໂກ 7:1-23

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມດີແລະຄວາມຊົ່ວອັນແທ້ຈິງອອກມາຈາກທາງໃນບໍ່ແມ່ນການປະຕິບັດຕາມຮີດຄອງປະເພນີ ເຖິງແມ່ນຮີດຄອງປະເພນີ ຂອງຄຣິສຕຽນທີ່ເຄີຍປະຕິບັດກັນມາ.

**ຄຳຖາມເພື່ອການສຳຣວດ:** ເຮັດວິທີໃດພວກເຮົາຈະບໍ່ເຮັດໃຫ້ຄວາມເຊື່ອກາຍເປັນປະເພນີທັມມະດາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະປຽບທຽບວິທີການຂອງອົງພຣະເຢຊູ ແລະພວກຟາຣີຊາຍ ແລະບອກໃຫ້ຮູ້ວ່າຄົນເຮັດຕາມໃຜຈິງກາຍເປັນຄົນທີ່ມີຄວາມເຊື່ອອັນແທ້ຈິງ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອຳນາດຂອງພຣະຄຳພີທີ່ໃຊ້ແນະນຳໃນຊີວິດ ແລະການຮັບໃຊ້.
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.
- ໃຫ້ຮູ້ຄຸນຄ່າຂອງທຸກຄົນວ່າເຂົາໄດ້ຖືກສ້າງຂື້ນຕາມພຣະລັກສະນະຂອງພຣະເຈົ້າ
- ຝຶກສອນໃຫ້ຄົນກາຍເປັນຜູ້ນຳຮັບໃຊ້

## ບົດນຳອະທິບາຍ

ພວກຟາຣີຊາຍໄດ້ຫາເຣື່ອງໃສ່ພວກສາວົກວ່າ ສາວົກຂອງພຣະເຢຊູບໍ່ເອົາຫົວຊາຕໍ່ປະເພນີ ຄຳສອນທີ່ພວກເຂົາໄດ້ພາກັນປະຕິບັດມາເປັນເວລາດົນນານ. ດັ່ງນັ້ນ, ອົງພຣະເຢຊູໄດ້ຕອບພວກເຂົາໂດຍປະກາດວ່າ ຄວາມດີແລະຄວາມຊົ່ວໄດ້ເກີດມາຈາກທາງໃນ ຄືຈາກຈິດໃຈຂອງມະນຸດ.

## ການເຂົ້າໃຈໃນເນື້ອເຣື່ອງ

ສືບຕໍ່ການຮັບໃຊ້ໃນເມືອງຄາລີເລ, ພຣະເຢຊູ "ໄປບ້ານຂອງຕົນເອງ," ນາຊາເຣັດ" (ມາຣະໂກ 6:1). ມັນເປັນປະເພນີຂອງພວກຢິວທີ່ຍອມໃຫ້ຄົນອື່ນສອນໃນເວລາພິເສດ, ພຣະເຢຊູໄດ້ສອນໃນທັມມະສາລາໃນເມືອງນັ້ນໃນວັນຊະບາໂຕ. ຜູ້ທີ່ຟັງພຣະເຢຊູສອນມີຄວາມແປກໃຈໃນຄຳສອນນັ້ນ (6:2).

ແມ່ນແລ້ວມີຫລາຍຄົນແປກໃຈ ແຕ່ກໍມີບາງຄົນບໍ່ເຫັນດີນຳການສອນນັ້ນ ເພາະພວກເຂົາໄດ້ຮູ້ຈັກປະວັດເບື້ອງຫລັງຂອງພຣະເຢຊູດີ. ພວກເຂົາໄດ້ຮູ້ຈັກຄອບຄົວ ແລະຮູ້ວ່າພຣະອົງເປັນຊ່າງໄມ້. ດັ່ງນັ້ນ, ພວກເຂົາບໍ່ພໍໃຈໃນຄຳສອນຂອງພຣະອົງ. ນີ້ເປັນຜົນສະທ້ອນທີ່ພວກເຂົາພາກັນປະຕິເສດ ພຣະອົງຈຶ່ງບໍ່ໄດ້ກະທຳການອັສຈັນຫລາຍຢ່າງໃນເມືອງນັ້ນ. ມີພຽງສອງສາມຄົນພຣະອົງປົວໃຫ້ດີພະຍາດ ເພາະການບໍ່ຍອມເຊື່ອຟັງຂອງຄົນໃນເມືອງນັ້ນ (6:2-6).

ອອກຈາກບ້ານນີ້ ໄປເຂົ້າບ້ານນັ້ນ ພຣະເຢຊູໄດ້ສົ່ງພວກສາວົກ 12 ຄົນອອກໄປປະກາດເປັນຄູ່. ພຣະອົງປະທານອຳນາດໃຫ້ພວກເຂົາດ້ວຍພຣະນາມຂອງພຣະອົງ. ຕາມທີ່ພວກເຂົາໄດ້ປະຕິບັດຮັບໃຊ້ ພວກເຂົາໄດ້ເຫັນການອັສຈັນຫລາຍປະການ (6:7-13).

ພຣະເຢຊູໄດ້ສົ່ງພວກສາວົກຂີ່ເຮືອຂ້າມນ້ຳທະເລຄາລີເລໄປລ່ວງໜ້າ. ສ່ວນພຣະອົງໄດ້ຢູ່ກ່ອນເພື່ອໄຫວ້ວອນ. ເມື່ອເຫັນວ່າພວກສາວົກຖືກລົມພະຍຸພັດ ພຣະເຢຊູກໍເລີຍຍ່າງເທິງໜ້ານ້ຳໄປຫາພວກເຂົາ. ໃນເມື່ອພວກເຂົາໄດ້ເຫັນພຣະອົງພວກເຂົາພາກັນຢ້ານ. ເຂົາລືມໄປແລ້ວທີ່ເຄີຍເຫັນພຣະອົງຊົງລ້ຽງຄົນ 5000 ຄົນ. ພຣະອົງຈຶ່ງຍົກເອົາຄວາມຢ້ານແລະຄວາມເຊື່ອຂຶ້ນມາເວົ້າທຽບອີກ. ໃນທີ່ສຸດພຣະອົງກໍເລີຍເຂົ້າໄປໃນເຮືອໄປກັບພວກເຂົາ ແລະສັ່ງໃຫ້ລົມພະຍຸຢຸດສງັດລົງ (6:45-52).

ພວກສາວົກ ແລະພຣະເຢຊູໄດ້ໄປຢຸດທີ່ທ່າເຮືອເມືອງເຄັນເນຊາເຣັດ. ດັ່ງນັ້ນ, ຄົນຫລາຍໆຄົນໄດ້ນຳຄົນເຈັບປ່ວຍມາຫາພຣະອົງ ເພື່ອພຣະເຢຊູຈະໄດ້ປົວພວກເຂົາໃຫ້ດີ. ເຖິງແມ່ນຜູ້ໃດໄດ້ຈັບບາຍເສື້ອຂອງພຣະເຢຊູກໍດີພະຍາດ. (6:53-56).

## ການແປພຣະຄຳພີ

### <u>ເຫດການທີ່ເກີດຂຶ້ນ</u> (7:1-5)

7:1. ເຖິງແມ່ນວ່າອົງພຣະເຢຊູໄດ້ປະກາດທີ່ເມືອງຄາລີເລ ແຕ່ຍັງມີບາງຄົນຈາກທາງພາກໃຕ້ຄືຈາກກຸງເຢຣູຊາເລັມຂຶ້ນມາຫາພຣະອົງ. ພວກເຂົາພາກັນມາຫາພຣະອົງເພື່ອຈະສອບເຖິງກິຈການທີ່ພຣະອົງຊົງກະທຳນັ້ນ.

ພວກຟາຣີຊາຍແມ່ນສ່ວນນຶ່ງຂອງສາສນາຢິວ ພວກເຂົາຖວາຍຕົນເອງຮັກສາພຣະບັນຍັດໄວ້ຢ່າງເຄັ່ງຄັດ. ຟາຣີຊາຍມີຄວາມໝາຍວ່າໄດ້ຖືກແຍກອອກໄວ້. ເພື່ອຈະເຂົ້າໃຈກົດບັນຍັດດີ ພວກເຂົາໄດ້ສ້າງສອງປະເພນີຂຶ້ນມາຄື: ປະເພນີໃຊ້ປາກເປົ່າແລະສິ່ງທີ່ຈົດຂຽນໄວ້. ພວກເຂົາເປັນຄົນທີ່ເຮັດຕາມພຣະບັນຍັດດີກວ່າຄົນອື່ນໆໃນສັດຕະວັດທີນຶ່ງນີ້.

ມີອີກຸ່ມນຶ່ງທີ່ເຂົ້າຮ່ວມຄືພວກ "ນັກທັມບັນດິດ" ເປັນພວກທີ່ໃຊ້ມືຈົດກ່າຍພຣະຄັມພີ. ພວກເຂົາບໍ່ພຽງແຕ່ຈົດກ່າຍເທົ່ານັ້ນ ພວກເຂົາຍັງໄດ້ຕີຄວາມໝາຍຂອງພຣະຄັມພີເໝືອນກັນທີ່ອີງຕາມກົດບັນຍັດຂອງພວກຢິວ.

7:2. ໃນເມື່ອທັງສອງພວກນີ້ກຳລັງຈ້ອງມອງເບິ່ງພວກສາວົກກຳລັງກິນເຂົ້າຢູ່ ພວກເຂົາສັງເກດເບິ່ງວ່າພວກສາວົກບໍ່ໄດ້ລ້າງມືກ່ອນກິນເຂົ້າ. ພວກເຂົາບໍ່ໄດ້ໝາຍຄວາມວ່າມືຂອງພວກສາວົກເປື້ອນ ແຕ່ຍັງບໍ່ໄດ້ຖືກເຮັດພິທີຊຳຣະລ້າງເລີຍ. ສິ່ງເປື້ອນແລະສິ່ງບໍ່ໄດ້ຊຳຣະລ້າງຖືວ່າເປັນສິ່ງກົງກັນຂ້າມກັບຄວາມບໍຣິສຸດ.

7:3-4. ມາຣະໂກໄດ້ເວົ້າເຖິງພິທີຊຳຣະລ້າງນີ້ເປັນພິທີສຳຄັນໃຫຍ່ ຄືໃຫ້ລ້າງມືກ່ອນກິນເຂົ້າ. ພວກສາວົກບໍ່ໄດ້ເຮັດພິທີຊຳຣະລ້າງມື ເພາະເວລາເຂົາຍ່າງໄປຕາມທ້ອງຕລາດມືຂອງພວກເຂົາອາດຈັບບາຍສິ່ງເປື້ອນ. ດັ່ງນັ້ນ, ພິທີລ້າງມືນີ້ຈຶ່ງເປັນພິທີສຳຄັນໃນພວກຟາຣີຊາຍ ເພື່ອບໍ່ໃຫ້ສິ່ງທີ່ເຂົາຈະຈັບບາຍນັ້ນເປັນພະຍາດຕິດແປດ.

ພິທີຊຳຣະລ້າງນີ້ບໍ່ແມ່ນລ້າງມືເທົ່ານັ້ນຕ້ອງຊຳຣະລ້າງເຄື່ອງໃຊ້ໃນເຮືອນ. ພວກຟາຣີຊາຍແລະພວກນັກທັມນີ້ເປັນຄົນຮັກສາທຳນຽມຢ່າງເຄັ່ງຄັດທີ່ສຸດເພື່ອບໍ່ໃຫ້ຕົນເອງເປື້ອນ.

7:5. ໃນເມື່ອຮູ້ຈັກເບື້ອງຫລັງນີ້ແລ້ວ ທ່ານອາດມີຄວາມເຂົ້າໃຈເພີ້ມທີ່ພວກຫົວໜ້າສາສນາໄດ້ຖາມຂື້ນ. ພວກເຂົາຖາມເພື່ອຈະໃຫ້ເຂົ້າໃຈວ່າ ເປັນຫຍັງພວກສາວົກຈຶ່ງບໍ່ໂຄຣົບປະເພນີ ໂດຍກິນເຂົ້າຢ່າງບໍ່ໄດ້ເຮັດພິທີຊຳຣະກ່ອນ.

## <u>ບໍ່ມີປໂຍດ</u> (7:6-13)

7:6-7. ຄຳຕອບສ່ວນນຶ່ງທີ່ພຣະເຢຊູໄດ້ຕອບຜູ້ຖາມ ພຣະອົງໄດ້ອ້າງເຖິງຜູ້ປະກາດພຣະທັມເອຊາຢາ 29:13. ພຣະຄຳນີ້ໄດ້ເວົ້າເຖິງພິທີຊຳຣະມີຄວາມສຳຄັນກວ່າຄວາມສົງສານ. ພວກເຂົາພາກັນຮັບໃຊ້ພຣະເຈົ້າແຕ່ປາກ, ແຕ່ພວກເຂົາບໍ່ໄດ້ເຊື່ອຟັງພຣະອົງເລີຍ. ການທີ່ເຂົານະມັສການພຣະເຈົ້ານັ້ນໄຮ້ດຽງສາເພາະພວກເຂົາໄດ້ເຮັດຕາມປະເພນີຂອງມະນຸດ ແທນທີ່ຈະຕາມຄຳສອນອັນສັກສິດ.

ການເຮັດຢ່າງນີ້ພວກເຂົາກາຍເປັນ "ພວກໜ້າຊື່ໃຈຄົດ" ພວກເຂົາເຮັດດີແຕ່ບໍ່ແມ່ນຄວາມຈິງຈາກໃຈ. ພວກເຂົາບໍ່ໄດ້ເປັນຫ່ວງຕໍ່ພິທີຊຳຣະລ້າງ ແຕ່ພວກເຂົາຊອກເອົາຄວາມຜິດຕາມຄວາມເຂົ້າໃຈ ແລະຕີຄວາມໝາຍຂອງພວກເຂົາ.

7:8. ພຣະເຢຊູໄດ້ບອກກັບພວກຟາຣີຊາຍວ່າ ພວກເຂົາເປັນຄົນປະລະພຣະບັນຍັດຂອງພຣະເຈົ້າ ແຕ່ຍອມຟັງຄຣູທີ່ເປັນມະນຸດ.

7:9. ຄຳຕອບຂອງພຣະເຢຊູຕໍ່ໄປແມ່ນພຣະອົງຕອບພວກຫົວໜ້າສາສນາ ວ່າພວກເຂົາໄດ້ເອົາຄຳສອນຈາກມະນຸດມາແທນພຣະບັນຍັດຂອງພຣະເຈົ້າ. ພຣະອົງເຫັນວ່າພວກເຂົາມີວິທີທາງດີທີ່ຈະບໍ່ເອົາຄຳສອນຂອງພຣະເຈົ້າມາໃຊ້.

7:10-12. ພຣະເຢຊູໄດ້ອ້າງຈາກປື້ມອົພຍົບ 20:12 ແລະ 21:17, ພຣະເຢຊູເຫັນວ່າພວກເຂົາມີຄວາມເຊື່ອໃນດ້ານສາສນາເບິ່ງແຍງພໍ່ແມ່ທີ່ເຖົ້າແກ່ ແຕ່ພວກເຂົາບໍ່ພາກັນປະຕິບັດຕາມ. ພວກເຂົາໜີຈາກຂໍ້ຜູກມັດໂດຍອ້າງວ່າໄດ້ແຍກໄວ້ຕ່າງຫາກແລ້ວເພື່ອຈະຊ່ວຍເວລາພໍ່ແມ່ເຖົ້າແກ່. ມາຣະໂກໄດ້ອະທິບາຍເຖິງ "ສິ່ງແຍກໄວ້ຕາກຫາກ" ຊຶ່ງເປັນຂອງຖວາຍແກ່ພຣະເຈົ້າ.

ໃນເມື່ອຄົນນຶ່ງຄົນໃດໄດ້ຖວາຍຕົວເພື່ອພຣະເຈົ້າແລ້ວ ພວກເຂົາຄິດວ່າບໍ່ຈຳເປັນທີ່ຕ້ອງຮັກສາຜູ້ເປັນພໍ່ແມ່. ດັ່ງນັ້ນ, ພວກຟາຣີຊາຍຈຶ່ງຍຶດຖືເອົາຫລັກການນີ້ມາໃຊ້ ຈົນພວກເຂົາບໍ່ມີເງິນທີ່ຈະຮັກສາຜູ້ເປັນພໍ່ແມ່.

7:13. ເມື່ອເຮັດດັ່ງນີ້ ພວກຟາຣີຊາຍແລະພວກນັກທັມຈຶ່ງເຮັດໃຫ້ພຣະບັນຍັດໃຊ້ການບໍ່ໄດ້. ພຣະເຢຊູໄດ້ກ່າວວ່າພຣະບັນຍັດຂໍ້ໃຫຍ່ຄືໃຫ້ກຽດຜູ້ເປັນພໍ່ແມ່. ພວກເຂົາໄດ້ເອົາປະເພນີຂອງມະນຸດໃຫຍ່ກວ່າພຣະບັນຍັດຂອງພຣະເຈົ້າ.

## <u>ກ່າວຢ່າງລະອຽດ</u> (7:14-15)

7:14. ພຣະເຢຊູໄດ້ຕອບພວກຫົວໜ້າສາສນາຕອນທີສາມວ່າຄື "ພຣະອົງໄດ້ຮ້ອງໃຫ້ຝູງຊົນມາຫາ" ແລະໄດ້ບອກຫລັກການຢ່າງລະອຽດ. ພຣະອົງໄດ້ບອກໃຫ້ຄົນທີ່ຢູ່ຫັ້ນ ໃຫ້ເຂົ້າໃຈເຖິງຫລັກການຂອງພຣະຄຣິດ.

7:15. ຫລັກການຄືວ່າ ສິ່ງທີ່ເຂົ້າໄປໃນຮ່າງກາຍບໍ່ໄດ້ເຮັດໃຫ້ຊີວິດເປື້ອນ. ສິ່ງທີ່ກິນເຂົ້າໄປບໍ່ອາດເຮັດໃຫ້ຊີວິດຂອງຄົນເປື້ອນໄດ້. ສິ່ງທີ່ເຮັດໃຫ້ຕົນເອງເປື້ອນແມ່ນນິສັຍພາຍໃນຈິດໃຈ.

<u>ອະທິບາຍ</u> (7:16-23)

7:16. ຂໍ້ນີ້ເຮົາບໍ່ເຫັນແລະຈະບໍ່ມີໃນປື້ມພຣະຄັມພີສະບັບທີ່ແປໃໝ່ ເພາະວ່າມັນບໍ່ມີຢູ່ໃນສະບັບເດີມທີ່ເປັນພາສາກຣີກ.

7:17. ໃນເມື່ອຝູງຊົນໄດ້ແຍກກັນໄປແລ້ວ ແລະພວກສາວົກພາກັນຢູ່ກັບອົງພຣະເຢຊູໃນເຮືອນ ພວກເຂົາໄດ້ມາຫາຖາມ ພຣະເຢຊູເຖິງຄວາມໝາຍຂອງຄວາມອຸປະມານັ້ນທີ່ຈົດໄວ້ໃນ 7:15.

7:18-19. ພຣະອົງບໍ່ພໍພຣະທັຍ ດັ່ງນັ້ນພຣະອົງຈຶ່ງຖາມພວກເຂົາວ່າ ເປັນດ້ວຍເຫດໃດພວກເຂົາຈຶ່ງພາກັນເປັນຄົນຕາບອດຫູຕຶງທີ່ບໍ່ເຂົ້າໃຈເຖິງຄວາມຈິງທີ່ພຣະອົງໄດ້ກ່າວນັ້ນ. ພຣະອົງໄດ້ຢໍ້າອີກວ່າບໍ່ມີອັນໃດທີ່ເຂົ້າໄປໃນທີ່ເຮັດໃຫ້ຄົນເປື້ອນຫລືບໍ່ສະອາດ. ອາຫານບໍ່ສາມາດເຂົ້າໄປໃນໃຈຂອງຄົນໄດ້. "ຫົວໃຈ" ເປັນສູນກາງຂອງຄວາມຮູ້ສຶກແລະດຶງດູດຈິດໃຈຂອງມະນຸສໂລກ.

ອາຫານການກິນ ໃນເມື່ອກິນເຂົ້າທ້ອງແລ້ວກໍຜ່ານອອກໄປ. ບາງອາຫານເມື່ອກິນເຂົ້າໄປແລ້ວກໍໄດ້ໄປຫລໍ່ລ້ຽງຮ່າງກາຍ ແລະບາງພາກສ່ວນກໍອອກໄປເສັຽໃນຂ້າງນອກ. ໃນປະເພນີຂອງພວກຢິວ ພວກເຂົາຖືວ່າອາຫານບາງຢ່າງສະອາດແລະບາງຢ່າງກໍບໍ່ສະອາດ. ແຕ່ອົງພຣະເຢຊູໄດ້ກ່າວຕໍ່ພວກເຂົາວ່າອາຫານທີ່ພວກສາວົກກິນນັ້ນບໍ່ແມ່ນສິ່ງບໍ່ສະອາດເພາະພວກເຂົາບໍ່ໄດ້ລ້າງມື.

7:20. ສິ່ງທີ່ເຮັດໃຫ້ມະນຸດບໍ່ສະອາດແມ່ນສິ່ງທີ່ອອກມາຈາກທາງໃນບໍ່ແມ່ນສິ່ງທີ່ເຂົ້າໄປ. ພຣະເຢຊູໄດ້ເວົ້າເຖິງຄວາມສຳຄັນຂອງທັມມະຈະຣິຍາເປັນຄວາມສະອາດ ບໍ່ແມ່ນຄວາມສະອາດຕາມປະເພນີ.

7:21-22. ພຣະອົງໄດ້ບອກສິ່ງທີ່ເຮັດໃຫ້ຄົນບໍ່ສະອາດ. ການກະທຳແລະນິສັຍເຫລົ່ານີ້ເປັນຜົນສະທ້ອນທີ່ອອກມາຈາກທາງໃນ. ສິ່ງເຫລົ່ານີ້ແຫລະເຮັດໃຫ້ຄົນເຮົາເປື້ອນ ແລະບໍ່ສະອາດ.

ສິ່ງທີ່ທຳຮ້າຍຄົນອື່ນແມ່ນເລີ້ມມາຈາກ "ຄວາມຄິດຊົ່ວ." ແລະຕິດຕາມໄປເປັນການກະທຳຫົກຢ່າງ ທີ່ເປັນສິ່ງຊົ່ວຫລາຍໃນພາສາເດີມຂອງພຣະຄັມພີໃໝ່ເຊັ່ນ. "ການຜິດຊາຍຍິງ, ການລັກຊັບ, ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມັຽ, ການໂລບ, ການອະທັມ, ການລໍ້ລວງ, ຣະຄະຕັນຫາ, ການອິດສາ, ການນິນທາ, ຄວາມຈອງຫອງ, ຄວາມໂງ່ທີ່ປ່ອຍຕົວໄປຕາມລຳພັງໃຈ."

7:23. ສິ່ງທີ່ກ່າວມາຂ້າງເທິງນີ້ລ້ວນແລ້ວທີ່ມາຈາກທາງໃນ. ມັນເປັນສິ່ງທີ່ເຮັດໃຫ້ຄົນເຮົາບໍ່ສະອາດຫລືເປື້ອນໄດ້. ພິທີຫລືປະເພນີເຮັດຫຍັງບໍ່ໄດ້ ແຕ່ທັມມະຈະຣິຍາດີສາມາດປ່ຽນແປງໃຫ້ສະອາດໄດ້.

**ແຜນການສອນ**

1. ໃຫ້ຊອກເອົາຜູ້ອ່ານໃນຫ້ອງຮຽນທີ່ມີຄວາມສາມາດອ່ານໄດ້ຢ່າງຄ່ອງແຄ້ວດີ. ໃຫ້ລາວອ່ານ ມາຣະໂກ 7:1-23. ຖ້າເປັນໄປໄດ້ໃຫ້ຄົນອ່ານນຸ່ງເຄື່ອງບູຮານ. ຖ້າຫາຄົນອ່ານບໍ່ໄດ້ໃຫ້ເອົາເທບທີ່ເວົ້າເຣື່ອງນີ້ມາເປີດໃຫ້ຄົນຟັງ.

2. ໃຫ້ຂຽນໃສ່ກະດານສາມຄຳຕໍ່ໄປນີ້: "ທຳນຽມ, ກົດເກດ, ແລະໜ້າໄຫວ້ຫລັງຫລອກ" ໃຫ້ປະຊ່ອງຫວ່າງເພື່ອຄົນອື່ນຈະໄດ້ຂຽນຄວາມເຂົ້າໃຈຂອງຕົນເອງເພີ້ມ.

3. ຂໍໃຫ້ສະມາຊິກໃນຫ້ອງສຶກສາວິຈັຍເຖິງຄວາມເວົ້າເຫລົ່ານີ້ທີ່ເຂົາໄດ້ຍິນຈາກການອ່ານ ມາຣະໂກ 7:1-23. ຫລັງຈາກອ່ານແລ້ວຂໍໃຫ້ທຸກຄົນອະທິບາຍຕາມຄວາມເຂົ້າໃຈຂອງຕົນເອງເຖິງຄວາມເວົ້າ "ປະເພນີ, ກົດເກນ, ແລະໜ້າຊື່ໃຈຄົດ."

4. ແບ່ງຫ້ອງຮຽນໃຫ້ເປັນສາມກຸ່ມ ໃຫ້ແຕ່ລະກຸ່ມສົນທະນາກັນແລະລາຍງານໃນກຸ່ມໃຫຍ່ເຖິງການຕົກລົງກັນວ່າຄຳເວົ້ານັ້ນມີຄວາມໝາຍຢ່າງໃດ?

ບອ

## ແນະນຳຄູສອນ

## ບົດຮຽນທີ 7

## ບໍ່ມີຜູ້ໃດຕາບອດໄປກວ່ານີ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 8:11-26

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມາຣະໂກ 8:1-26

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຕ້ອງມີນຕາຂຶ້ນ ແລະເອົາຊັຍຊະນະຕໍ່ບ່ອນເຮົາບໍ່ເຫັນຖ້າພວກເຮົາຕ້ອງການເຫັນພຣະເຢຊູດີ ແລະຕອບສນອງຕໍ່ພຣະອົງຢ່າງຖືກຕ້ອງ.

**ຄຳຖາມເພື່ອການສຳຣວດ:** ມີສິ່ງໃດບໍ່ທີ່ພວກເຮົາຕ້ອງການເຫັນ ແລະເຂົ້າໃຈເຖິງອົງພຣະເຢຊູ, ເຖິງເຮົາເອງ, ແລະຄົນອື່ນໆ ຖ້າພວກເຮົາມີນຕາຂຶ້ນ ແລະເອົາຊັຍຊະນະຕໍ່ບ່ອນເຮົາບໍ່ເຫັນ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄຈ້ແຍກເຖິງຄວາມຕາບອດຂອງພວກຟາຣີຊາຍ, ຂອງພວກສາວົກ ແລະເຮັດໃຫ້ຮູ້ວ່າສິ່ງໃດຈະຊ່ວຍໃຫ້ເຫັນອົງພຣະເຢຊູດີຂຶ້ນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອຳນາດຂອງພຣະຄັມພີທີ່ໃຊ້ແນະນຳໃນຊີວິດ ແລະການຮັບໃຊ້.
- ເພື່ອຈະແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເພື່ອເສີມສ້າງຊີວິດໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## ບົດນຳ

ອົງພຣະເຢຊູໄດ້ສະເດັດອອກຈາກຄາລີເລທາງທິດຕາເວັນອອກ ໄປຫາເມືອງໄທຣາທີ່ເປັນພາກສ່ວນຂອງທະເລຊີຣີ. ພຣະອົງເຂົ້າໄປໃນເຮືອນເພື່ອຈະສອນພວກສາວົກແລະພັກຜ່ອນ, ແຕ່ແນວໃນກໍດີ ມີຝູງຄົນຕິດຕາມໄປເລື້ອຍໆ. ມີຜູ້ຍິງທີ່ເປັນຊາວກຣີກ ທີ່ຢູ່ເຂດນັ້ນຊອກຫາພຣະອົງ. ລາວຕ້ອງການໃຫ້ພຣະອົງປົວລູກສາວຂອງລາວ ເພາະມີຜີສິງ.

ພຣະອົງໄດ້ເວົ້າກັບຍິງນັ້ນເປັນຄຳທວຍວ່າ ພຣະອົງໄດ້ມາເພື່ອປະກາດກັບຄົນຊາດຢິວ. ພວກຢິວນັ້ນມັກດູຖູກຄົນຕ່າງຊາດຖືວ່າພວກນີ້ເປັນ "ໝາ." ຜູ້ຍິງຄົນນີ້ໄດ້ຕອບພຣະເຢຊູວ່າ ໝາກໍຍັງໄດ້ກິນຂອງເສດເຫລືອທີ່ຕົກຈາກໂຕະ. ດັ່ງນັ້ນ, ພຣະເຢຊູຈິ່ງຕອບລາວວ່າ ລູກສາວຂອງລາວໄດ້ດີພະຍາດແລ້ວ ເພາະບໍ່ມີຜູ້ໃດທີ່ອົງພຣະເຢຊູບໍ່ຮັບເອົາຫລືຢູ່ນອກຄວາມເມດຕາຂອງພຣະອົງ. ອົງພຣະເຢຊູບໍ່ໄດ້ຫົວຊາຄວາມອິດສາຂອງພວກຢິວ (ມາຣະໂກ 7:24-30).

ພຣະເຢຊູໄດ້ເດີນທາງຕໍ່ໄປຈາກເມືອງໄທຣາໄປຍັງເມືອງຊີດອນ ທາງເໜືອຂອງແຄມທະເລ ແລະພຣະອົງໄດ້ລົງໄປເມືອງ ດີຄາໂປລີ ຊຶ່ງເປັນບ່ອນພວກຕ່າງຊາດພາກັນອາສັຍຢູ່. ໃນເມືອງນີ້ມີຄົນປາກກືກ, ຫູໜວກໄດ້ມາໃຫ້ພຣະອົງປົວ. ໃນເມື່ອປົວດີແລ້ວ ພຣະເຢຊູຫ້າມພວກເຂົາບໍ່ໃຫ້ບອກຄົນອື່ນ ແຕ່ແນ່ນອນຄົນພວກນີ້ມິດປາກບໍ່ໄດ້ ພວກເຂົາບໍ່ໄດ້ປະກາດໃຫ້ຜູ້ອື່ນຮູ້. ດັ່ງນັ້ນຝູງຊົນກໍມີຄວາມແປກປລາດທີ່ພຣະເຢຊູສາມາດປົວຄົນຢ່າງນີ້ໄດ້. ພຣະເຢຊູໄດ້ບອກພວກເຂົາບໍ່ໃຫ້ບອກຄົນອື່ນເພາະພຣະອົງບໍ່ຢາກໃຫ້ຄົນຮູ້ຈັກວ່າພຣະອົງເປັນພຽງຄົນເຮັດໄດ້ຊຳນີ້ເທົ່ານັ້ນ. ຄົນທັງຫລາຍໄດ້ເຫັນວ່າພຣະເຢຊູໄດ້ເຮັດຫລາຍໆຢ່າງໄດ້ດີ. (7:30-37).

ໃນຂະນະນັ້ນໄດ້ມີຝູງຊົນຢູ່ກັບພຣະອົງເປັນເວລາສາມວັນ ແລະພວກເຂົາຍັງບໍ່ໄດ້ເຫັນອາຫານຫຍັງເລີຍ. ພຣະອົງເປັນຫ່ວງວ່າພວກເຂົາຈະເປັນລົມເວລາຍ່າງກັບບ້ານ. ພຣະອົງຈຶ່ງຮ້ອງເອົາພວກສາວົກມາ ແລະຖາມເຂົາວ່າ ມີອາຫານຫລາຍຢູ່ບໍ່? ພວກເຂົາຕອບວ່າມີພຽງເຂົ້າຈີ່ເຈັດກ້ອນ ກັບປານ້ອຍສອງສາມໂຕ. ໃນສິ່ງທີ່ເຂົາມີນັ້ນ ອົງພຣະເຢຊູໄດ້ລ້ຽງຄົນ 4000 ຄົນ ທັງຜູ້ຍິງແລະເດັກນ້ອຍ ທີ່ສຸດກໍຍັງມີເຫລືອອີກເຈັດກະບຸງ. ຕໍ່ມາພຣະອົງໄດ້ເດີນຂ້າມທະເລຄາລີເລ (8:1-10).

## ການແປພຣະຄັມພີ

**ສັນຍາລັກ** (8:11-13).

8:11. ມາຣະໂກບໍ່ໄດ້ບອກວ່າພວກຟາຣີຊາຍມາຈາກໃສ. ບາງທີພວກເຂົາໄດ້ເດີນທາງຈາກກຸງເຢຣູຊາເລັມ ເພື່ອຈະມາຊອກຫາພຣະເຢຊູ 7:1. ການທີ່ພວກເຂົາໄດ້ຖາມພຣະເຢຊູ ບໍ່ໄດ້ໝາຍຄວາມວ່າພວກເຂົາໄດ້ມາເພື່ອຊອກຫາຄວາມຮູ້. ພວກເຂົາໄດ້ມາເພື່ອຊອກເອົາຄວາມຜິດ ວ່າພຣະອົງໄດ້ເຮັດຫຍັງແດ່ແລະດ້ວຍອຳນາດຢ່າງໃດ.

ພວກເຂົາໄດ້ທົດສອບແລະຈັບຄວາມຜິດ. ພວກເຂົາສັ່ງພຣະເຢຊູໃຫ້ເຮັດໝາຍສຳຄັນຕ່າງໆທີ່ມາຈາກສວັນ ເພື່ອຈະຮູ້ຈັກວ່າພຣະອົງໄດ້ມາຈາກພຣະເຈົ້າ. "ສວັນ" ເປັນຄຳເວົ້າທີ່ໃຊ້ໂດຍບໍ່ຕ້ອງໃຊ້ຊື່ຂອງພຣະເຈົ້າ. ສິ່ງພວກເຂົາຢາກເຫັນ ແມ່ນໝາຍສຳຄັນຈາກອົງພຣະຜູ້ເປັນເຈົ້ານັ້ນເອງ. ພວກເຂົາບໍ່ໄດ້ຢາກເຫັນການອັສຈັນເພາະການອັສຈັນນັ້ນໄດ້ກະທຳມາແລ້ວ. ແຕ່ພວກເຂົາຢາກເຫັນລັກຖານອັນສັກສິດກ່ອນເຊື່ອ.

8:12. ພຣະເຢຊູໄດ້ປັກຕາເບິ່ງພວກເຂົາ ແລະພຣະອົງຖາມເຂົາວ່າ ເປັນດ້ວຍເຫດໃດພວກເຂົາຈຶ່ງຕ້ອງການເຫັນໝາຍສຳຄັນອີກ. ພວກເຂົາຄວນຈະສັງເກດເບິ່ງສິ່ງພຣະອົງໄດ້ກະທຳນັ້ນແລະເຂົ້າໃຈ. ແຕ່ພວກເຂົາຢາກເຫັນລັກຖານສະເພາະເປັນພິເສດ. ອົງພຣະເຢຊູໄດ້ກະທຳມາແລ້ວ ຖ້າພວກເຂົາມືນຕາເບິ່ງສິ່ງທີ່ພຣະອົງໄດ້ກະທຳເຂົາຄົງເຂົ້າໃຈ.

ພຣະເຢຊູປະຕິເສດຄວາມຮ້ອງຂໍຂອງພວກເຂົາເພື່ອຢາກຈະເຫັນໝາຍສຳຄັນນັ້ນ. ພຣະອົງບອກວ່າຈະບໍ່ມີສັນຍາລັກອັນໃດອີກ ເພາະສັນຍາລັກທີ່ພຣະອົງກະທຳນັ້ນມີເຫດຜົນພໍແລ້ວ. ພຣະເຢຊູຈະບໍ່ກະທຳໝາຍສຳຄັນຫລືການອັສຈັນໃດໆ ເພື່ອພວກເຂົາຈະໄດ້ກອດເບິ່ງໃຫ້ພໍໃຈ. ພຣະອົງຫາກໍລ້ຽງຄົນ 4000 ພັນຄົນໂດຍເຂົ້າຈີ່ເຈັດກ້ອນ ແລະປານ້ອຍສອງສາມໂຕ. ເປັນດ້ວຍເຫດໃດພວກເຂົາຈຶ່ງບໍ່ເຫັນ ແລະຮັບເອົາວ່າເປັນການອັສຈັນຫລືໝາຍສຳຄັນທີ່ມາຈາກສວັນ?

8:13. ໃນເວລານັ້ນ, ພຣະເຢຊູໜີຈາກພວກເຂົາ. ພຣະອົງປະຕິເສດບໍ່ຍອມໃຫ້ພວກເຂົາບັງຄັບໃຫ້ເຮັດໝາຍສຳຄັນແລະສະແດງອຳນາດ. ພຣະອົງຂຶ້ນເຮືອແລະສະເດັດຂ້າມໄປທະເລຄາລີເລ. ພຣະອົງອາດຈະບໍ່ພໍໃຈນຳຄຳຖາມແລະນິສັຍຂອງພວກຟາຣີຊາຍເຖິງການກະທຳຂອງພຣະອົງ.

8:14. ເວລານີ້ ພວກສາວົກອາດຈະຫິວເຂົ້າ ເພາະພວກເຂົາຮູ້ສຶກວ່າພວກເຂົາມີພຽງເຂົ້າຈີ່ປ່ຽງດຽວ ພວກເຂົາລືມເອົາເຂົ້າຈີ່ທີ່ເຫລືອນັ້ນມານຳ ເພາະພຣະເຢຊູຈັດໃຫ້ພວກເຂົາຟ້າວໄປ, ເພື່ອໜີຈາກພວກຟາຣີຊາຍທີ່ສໍ້ຖາມພຣະອົງ.

ເຊື້ອແປ້ງເຮັດໃຫ້ເຂົ້າຈີ່ໂພງຂຶ້ນ. ໃນສມັຍນັ້ນ ເຊື້ອແປ້ງເປັນເຄື່ອງໝາຍຂອງການສໍ້ກົງ ແລະການຂຍາຍຂອງອຳນາດຂອງມານ. ເຊື້ອແປ້ງຂອງພວກຟາຣີຊາຍແມ່ນການບໍ່ເຊື່ອຟັງ ແລະການທີ່ພວກເຂົາຢາກເຫັນໝາຍສຳຄັນຈາກສວັນ ເພາະຢາກຮູ້ວ່າຄຳສອນຂອງອົງພຣະເຢຊູຄືງກັບສິ່ງກະທຳຫລືບໍ່. ເຊື້ອແປ້ງຂອງພວກເຮໂຣດແມ່ນກ່ຽວກັບ

ການຫລິ້ນຊູ້, ການຂ້າຄົນ, ການມັກໃຫຍ່ໃຝ່ສູງ. ທັງສອງພວກນີ້ໄດ້ປະຕິເສດຄຳສອນ ແລະບໍ່ເຊື່ອອົງພຣະເຢຊູ. ດັ່ງນັ້ນ, ອົງພຣະເຢຊູຈຶ່ງເຕືອນພວກເຂົາໃຫ້ລະວັງພວກເຫລົ່ານີ້ໃຫ້ດີ.

8:16. ພວກສາວົກຍັງບໍ່ທັນເຂົ້າໃຈໃນຄຳເວົ້າຂອງພຣະເຢຊູ. ພວກເຂົາພາກັນສົນທະນາກັນເຖິງການທີ່ບໍ່ມີເຂົ້າຈີ່ກິນໃນຕອນທ່ຽງນັ້ນ.

8:17. ພຣະເຢຊູໄດ້ຍິນພວກສາວົກລົມກັນ ພຣະອົງຈຶ່ງຖາມພວກເຂົາສາມຄຳ. ນຶ່ງ. ເປັນຫຍັງພວກເຂົາຈຶ່ງຍັງເວົ້າເຖິງເຂົ້າຈີ່ນັ້ນຢູ່. ອົງພຣະເຢຊູໄດ້ເວົ້າເຖິງສິ່ງເກີນເຂົ້າຈີ່ທີ່ລ້ຽງຮ່າງກາຍ ແຕ່ພວກສາວົກຍັງເວົ້າເຖິງເຂົ້າຈີ່ກິນໃນຕອນທ່ຽງ. ສອງ. ກ່ຽວຂ້ອງກັບການເຂົ້າໃຈຂອງພວກເຂົາ. ພວກເຂົາຍັງບໍ່ເຂົ້າໃຈໃນສິ່ງທີ່ພຣະອົງໄດ້ກ່າວ ຫລືຄວາມໝາຍນັ້ນ. ສາມ. ເປັນການຈົດຈໍ່ຕໍ່ຫົວໃຈແຂງກະດ້າງທີ່ພວກເຂົາບໍ່ມີຄວາມເຂົ້າໃຈຝ່າຍວິນຍານເລີຍ.

8:18-20. ພຣະເຢຊູໄດ້ຖາມເພີ້ມອີກສາມຄຳຖາມ. ພວກສາວົກມີຫູມີຕາ ແຕ່ພວກເຂົາບໍ່ໃຊ້ສິ່ງທີ່ມີໃຫ້ເຂົ້າໃຈຄວາມໝາຍທີ່ພຣະເຢຊູສອນ. ພຣະເຢຊູໄດ້ຖາມເຂົາໂດຍສະເພາະການລ້ຽງອັສຈັນ ເຖິງເຂົ້າຈີ່ທີ່ເຫລືອກິນທີ່ພວກສາວົກເກັບໄດ້ຫລັງຈາກທຸກຄົນໄດ້ກິນອີ່ມ. ພວກສາວົກທຸກຄົນຕອບຖືກໝົດວ່າມີຈັກກະບຸງທີ່ຍັງເຫລືອຢູ່.

8:21. ຄຳຖາມສຸດທ້າຍທີ່ພຣະເຢຊູຖາມແມ່ນເຖິງການເຂົ້າໃຈຂອງພວກເຂົາ. ເຖິງແມ່ນວ່າພວກເຂົາໄດ້ປະສົບການໃນເຫດການເຫລົ່ານັ້ນ, ແຕ່ພວກເຂົາບໍ່ໄດ້ເຂົ້າໃຈທີ່ເຫດການພຣະເຢຊູກະທຳຊຶ່ງເປັນທາງບອກເຖິງວ່າພຣະເຢຊູເປັນພຣະເມຊີອານ. ພວກເຂົາເປັນຄົນຕາບອດຕໍ່ສິ່ງທີ່ພຣະເຢຊູໄດ້ເຮັດມານັ້ນ.

**ສາຍຕາ (8:22-26)**

8.22. ໃນເມື່ອພຣະເຢຊູໄດ້ໄປເຖິງເມືອງເບັດຊີດາຍ ມີບາງຄົນໄດ້ນຳເອົາຄົນຕາບອດມາຫາພຣະອົງ. ຮ້ອງຂໍໃຫ້ພຣະອົງຈັບຄົນຕາບອດນັ້ນ ເພາະພວກເຂົາຕ້ອງການໃຫ້ພຣະເຢຊູປົວ. ຕາມປົກກະຕິວິທີທີ່ພຣະເຢຊູປົວຄົນຕາບອດຄືພຣະອົງໄດ້ໃຊ້ມືຈັບບາຍຕາຂອງຄົນນັ້ນ.

8:23. ແຕ່ບັດນີ້ ພຣະເຢຊູໄດ້ພາຄົນຕາບອດອອກໄປຈາກເມືອງ, ເພາະການປົວຄັ້ງນີ້ ພຣະເຢຊູຕ້ອງການເຮັດໃຫ້ມອນຫລັບ. ພຣະເຢຊູໄດ້ "ຖົ່ມນ້ຳລາຍໃສ່ຕາຂອງຄົນຕາບອດແລະພຣະອົງໄດ້ຈັບຕາລາວ." ອາດຈະແມ່ນພຣະເຢຊູຖົ່ມນ້ຳລາຍໃສ່ມື ແລ້ວເອົາມືແປະໃສ່ຕາຄົນຕາບອດນັ້ນ.

ພຣະເຢຊູໄດ້ຖາມຄົນຕາບອດວ່າລາວໄດ້ເຫັນຫຍັງບໍ່? ໃນບົດນີ້ບໍ່ໄດ້ບອກວ່າຄົນຕາບອດນັ້ນເຄີຍເຫັນຮຸ່ງມາກ່ອນບໍ່ຫລື ລາວເປັນຄົນຕາບອດແຕ່ເກີດ, ແຕ່ແນວໃດກໍຕາມລາວໄດ້ເສັຽສາຍຕາໃນເວລາໃດເວລານຶ່ງ. ດັ່ງນັ້ນ, ພຣະເຢຊູຖາມລາວ ຫວັງວ່າລາວອາດໄດ້ເຫັນອັນໃດອັນນຶ່ງ. ໃນຂໍ້ 8:28 ໄດ້ບອກວ່າ "ສາຍຕາຂອງລາວໄດ້ກັບຄືນມາ." ນັ້ນໝາຍຄວາມວ່າລາວອາດເຄີຍເຫັນມາແລ້ວຄັ້ງນຶ່ງ.

8:24. ຄົນຕາບອດຈຶ່ງຕອບວ່າໄດ້ເຫັນຄົນແຕ່ບໍ່ໄດ້ເຫັນດີ. ລາວບໍ່ສາມາດບອກວ່າ ອັນໃດເປັນຄົນ ແລະອັນໃດເປັນຕົ້ນໄມ້ ເພາະລາວເຫັນຄົນເໝືອນຕົ້ນໄມ້ຍ່າງໄປມາ.

8:25. ດັ່ງນັ້ນ, ພຣະເຢຊູຈຶ່ງເອົາມືຈັບຕາຄົນນັ້ນອີກບາດນຶ່ງ. ມີຄຳກິຣິຍາສາມຄຳໄດ້ເວົ້າເຖິງແສງຕາຂອງຄົນນັ້ນກັບຄືນດີ: "ຕາຂອງລາວໄດ້ເປີດອອກ, ແສງຕາກັບຄືນດີ, ແລະລາວໄດ້ເຫັນທຸກຢ່າງດີ."

8:26. ເໝືອນກັບຄົນທີ່ມີຜີເຂົ້າ ພຣະອົງໄດ້ສົ່ງລາວກັບຄືນບ້ານຫລັງຈາກດີແລ້ວ (5:19). ພຣະອົງໄດ້ສັ່ງໃຫ້ຄົນຕາບອດຄົນນີ້ກັບຄືນບ້ານ ບໍ່ໃຫ້ເຂົ້າໄປໃນເມືອງ. ພຣະເຢຊູບໍ່ຕ້ອງການໃຫ້ຄົນຫລາຍໆຄົນຮູ້ເຣື່ອງນີ້ໃນຂະນະທີ່ພຣະອົງກໍາລັງເດີນທາງໄປກຸງເຢຣູຊາເລັມ. ພຣະອົງບໍ່ຕ້ອງການໃຫ້ຄົນຮູ້ວ່າພຣະອົງເປັນຄົນປົວພະຍາດລ້າງໆ ຫລືຜູ້ທໍາການອັສຈັນຊື່ໆ.

**ແຜນການສອນ**

1. ໃນຫ້ອງຮຽນ ຂຽນໃສ່ກະດານເຖິງຄວາມສໍາຄັນຂອງບົດຮຽນນີ້, "ພວກເຮົາຕ້ອງມີນຕາຂື້ນ ແລະເອົາຊັຍຊະນະຕໍ່ບ່ອນເຮົາບໍ່ເຫັນ ຖ້າພວກເຮົາຕ້ອງການເຫັນພຣະເຢຊູດີ ແລະຕອບສະໜອງຕໍ່ພຣະອົງຢ່າງຖືກຕ້ອງ."

2. ຂຽນໃສ່ກະດານວ່າ, "ຄັ້ງນຶ່ງຕາບອດ ແຕ່ດຽວນີ້ເຫັນແລ້ວ." ໃຫ້ຮ້ອງເພງ ບົດ 79.

3. ໃຫ້ຜູ້ໃດຜູ້ນຶ່ງອ່ານ ມາຣະໂກ 8:1-10, ບອກວ່ານີ້ເປັນເບື້ອງຫລັງຂອງພຣະຄັມພີໃນວັນນີ້. ຮ້ອງຂໍໃຫ້ ຄົນນັ້ນອ້ອນວອນປິດ.

*ບວ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 8
## ບໍ່ແມ່ນທາງງ່າຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 8: 27-38
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ມາຣະໂກ 8: 27-38
**ຈຸດສຳຄັນຂອງບົດຮຽນນີ້:** ມີບ່ອນດຽວທີ່ເໝາະສົມສຳລັບທຸກຄົນຄືຢູ່ຂ້າງຫລັງພຣະເຢຊູ, ຕິດຕາມພຣະອົງ, ເຖິງວ່າທາງນັ້ນຈະບໍ່ແມ່ນທາງທີ່ງ່າຍ.
**ຄຳຖາມເພື່ອການສຳຣວດ:** ທ່ານຢູ່ໃສຖ້າເບິ່ງໃສ່ພຣະເຢຊູ-- ຂ້າງໜ້າ, ຂ້າງຫລັງ, ຢູ່ໄກແສນໄກ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຂົ້າໃຈຄວາມໝາຍຂອງພຣະທັມໃນຕອນນີ້ສຳລັບຊີວິດຂ້ອຍ ແລະເພື່ອຕອບສນອງພຣະເຢຊູໂດຍການຢັ້ງຢືນ ຫລືຢັ້ງຢືນອີກເທື່ອນຶ່ງເຣື່ອງຂໍ້ຜູກມັດຂອງຂ້ອຍກັບພຣະອົງ.

## ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ກ່ອນມື້ສອນໃຫ້ຈັດຕຽມອາສາສມັກຜູ້ນຶ່ງຊຶ່ງມີຄວາມຊຳນານໃນອາຊີບຂອງລາວ (ຊ່າງແປງຣົດ, ຊ່າງສ່ຽນ, ນາງພຍາບານ, ແລະຕໍ່ໄປ). ເລີ້ມບົດຮຽນໂດຍການ "ສົນທະນາກັບຜູ້ຊ່ຽວຊານ." ທ່ານອາດຈະຈັດແບບການຖາມແລະການຕອບດັ່ງຕໍ່ໄປນີ້: ທ່ານໄດ້ຮຽນວິຊານີ້ຢູ່ໃສ? ທ່ານຮຽນຈັກປີ? ທ່ານເຮັດຫຍັງແດ່ແຕ່ລະວັນ? ເນັ້ນເຣື່ອງການໃຊ້ເວລາຮຽນຫລືເວລາຕຽມຕົວໃນອາຊີບນັ້ນ ອາດຈະງ່າຍສຳລັບຄົນໜຸ່ມ ແຕ່ສຳລັບຄົນທີ່ມີອາຍຸສູງ ການຮຽນອາດຈະໃຊ້ເວລາຫລາຍ ແລະລຳບາກດ້ວຍ.

2. ເວົ້າວ່າ, ໃນຂະນະທີ່ພວກສາວົກພາກັນສຶກສາວ່າພຣະເຢຊູແມ່ນໃຜ, ພຣະອົງໄດ້ເປີດເຜີຍຫລາຍໆຢ່າງໃຫ້ພວກເຂົາຮູ້ ແລະເປັນເຣື່ອງທີ່ທ້າທາຍພໍສົມຄວນສຳລັບຜູ້ທີ່ຈະຕິດຕາມພຣະອົງ. ສາວົກທຸກຄົນຈະຕ້ອງເຂົ້າໃຈວ່າການຕິດຕາມພຣະເຢຊູຈະບໍ່ມີທາງທີ່ງ່າຍ ເພາະການຕິດຕາມພຣະອົງຈະຕ້ອງມີການຕັດສິນໃຈເດັດຂາດ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ໃຊ້ແຜນທີ່ ແລະຂໍ້ມູນຈາກ ມາຣະໂກ 8:27 ເພື່ອຊ່ວຍນັກຮຽນໃຫ້ເຫັນວ່າ ເມືອງກາຍຊາເຣັຽຟີລິບປອຍບ່ອນໃດ. ແນະນຳວ່າ ເມືອງນີ້ຕັ້ງຢູ່ໃຈກາງຂອງພວກນັບຖືສາສນາຕ່າງຊາດ ຊຶ່ງມີພວກນະມັສການພີບາອານ, ຜູ້ນັບຖືພຣະເຈົ້າທັງຫລາຍຂອງຄົນກຣີກ, ແລະຜູ້ນັບຖືຈັກພັດໂຣມ. ພຣະເຢຊູຊົງຖາມພວກສາວົກວ່າ "ຄົນທັງຫລາຍ" ເຊື່ອວ່າພຣະອົງແມ່ນໃຜ. ອ່ານ ມາຣະໂກ 8: 27-30. ຖາມ: ມີຫຍັງແດ່ທີ່ແຕກຕ່າງກັນໃນຄຳຕອບທີ່ຂໍ້ 28 ແລະຄຳຕອບຂອງເປໂຕກ່ຽວກັບ "ພຣະຄຣິດ" ໃນຂໍ້ 29 ? ຄຳວ່າ "ພຣະຄຣິດ" ໝາຍເຖິງຫຍັງ? ທ່ານຄິດວ່າເປັນຫຍັງພຣະເຢຊູຊົງສັ່ງຫ້າມພວກສາວົກບໍ່ໃຫ້ບອກຄົນອື່ນໆ?

4. ຖາມ: ທ່ານຄິດວ່າໃນຕອນນີ້ພວກສາວົກຮູ້ບໍ່ວ່າສິ່ງໃດຈະເກີດຂຶ້ນກັບພວກເຂົາ ແລະກັບພຣະເຢຊູ? ໃຫ້ເວລາເພື່ອບາງຄົນຈະໄດ້ຕອບຄຳຖາມ. ອ່ານ ມາຣະໂກ 8:31-37. ເວົ້າວ່າ, ພວກສາວົກຮູ້ລ່ວງໜ້າບໍ່ວ່າ ພຣະເຢຊູຈະກ່າວຢ່າງນັ້ນກັບພວກເຂົາ? ທ່ານສັງເກດໄດ້ວິທີໃດ? ຖາມ: ທ່ານຄິດວ່າຄວາມ "ຄິດຢ່າງມະນຸດ" ຂອງເປໂຕສຳລັບພຣະ

ເຢຊູມີແນວໃດແດ່? ໃຫ້ຜູ້ນຶ່ງອ່ານມາຣະໂກ 9:30-32 ແລະ 10:32-34. ຖາມ: ທ່ານຄິດວ່າເປັນຫຍັງທ່ານມາຣະໂກຈຶ່ງບັນທຶກຄໍາທໍານວາຍຂອງພຣະເຢຊູເຖິງສາມຄັ້ງ?

5. ອ່ານມາຣະໂກ 8:37. ນໍາພາການສົນທະນາໂດຍໃຊ້ຄໍາຖາມຕໍ່ໄປນີ້:

- ເປັນຫຍັງບາງຄົນຈຶ່ງລະອາຍເຣື່ອງພຣະເຢຊູ ແລະຄໍາສັ່ງສອນຂອງພຣະອົງ?
- ບາງຄັ້ງພວກເຮົາໄດ້ເຮັດຫຍັງແດ່ທີ່ສແດງໃຫ້ເຫັນວ່າພວກເຮົາລະອາຍໃນການຕິດຕາມພຣະຄຣິດ?
- ພວກເຮົາຈະຕິດຕາມພຣະເຢຊູຢ່າງບໍ່ລະອາຍໄດ້ແນວໃດ ໃນສັງຄົມຂອງພວກເຮົາ?

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ເວົ້າວ່າ, ພວກເຮົາຄິດວ່າການແບກໄມ້ກາງແຂນເປັນພຽງເຣື່ອງສົມມຸດ, ແຕ່ສໍາລັບພຣະເຢຊູການແບກໄມ້ກາງແຂນນັ້ນເປັນເຣື່ອງຈິງ. ຖາມ: ໃຜແດ່ໃນພວກເຮົາທີ່ມີຕົວຢ່າງຂອງການແບກໄມ້ກາງແຂນ? ໃຫ້ເວລາຕອບ.

7. ອ່ານ <u>ປະຕິບັດຕາມຄໍາສອນຂອງພຣະເຢຊູ</u> ໃນພາກສຸດທ້າຍຂອງບົດຣຽນ. ແນະນໍາແຕ່ລະຄົນໃຫ້ເຮັດບັນຊີຫລືລາຍການສໍາລັບຕົວເອງວ່າຈະເຮັດຫຍັງແດ່. ແນະນໍາຜູ້ທີ່ຍັງລັງເລໃຈໃຫ້ຕັດສິນໃຈເຊື່ອໃນອົງພຣະຄຣິດ.

*ສຄ*

## <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນທີ 9</u>

## <u>ຕ້ອງແມ່ນ "ຂ້ອຍກ່ອນ"</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 9: 30-37

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ມາຣະໂກ 9: 1-50

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພວກເຮົາຈະຕ້ອງປ່ຽນນິສັຍທີ່ວ່າ "ຂ້ອຍກ່ອນ" ຖ້າເຮົາຢາກເປັນຜູ້ສັດຊື່ໃນການຕິດຕາມພຣະເຢຊູ.

**<u>ຄຳຖາມເພື່ອການສຳຣວດ:</u>** ມີຫຍັງຜິດບໍ່ຖ້າທຸກຢ່າງຕ້ອງແມ່ນ "ຂ້ອຍກ່ອນ"? ນັ້ນຄືວິທີຂອງຄົນທັງໂລກບໍ່ແມ່ນບໍ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຮູ້ວ່າມີຫຍັງແດ່ທີ່ພຣະເຢຊູຕ້ອງການໃຫ້ພວກເຮົາປ່ຽນແປງຈາກຄວາມຄິດທີ່ວ່າຕ້ອງ "ຂ້ອຍກ່ອນ."

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ກ່ອນມື້ຮຽນ, ຊອກຫາຜູ້ນຶ່ງທີ່ເປັນຜູ້ຈັດການ ຫລືຫົວໜ້າງານຊຶ່ງມີໜ້າທີ່ຄວບຄຸມຄົນງານໃນບໍຣິສັດ ຫລືໃນອົງການອາສາສມັກ (ທ່ານອາດຈະຫາຄົນຈາກຂ້າງນອກກໍໄດ້). ເລີ້ມການຮຽນດ້ວຍການສຳພາດ ໂດຍໃຊ້ຄຳຖາມຕໍ່ໄປນີ້:

- ພະນັກງານທີ່ຢູ່ກັບທ່ານ ເຮັດວຽກຫຍັງ?
- ໃຜເປັນລູກຄ້າຫລືແຂກຂອງພວກທ່ານ?
- ການບໍຣິການລູກຄ້າສຳຄັນຫລາຍບໍ່ ໃນບໍຣິສັດຫລືອົງການຂອງທ່ານ?
- ທ່ານເຮັດແນວໃດແດ່ເພື່ອໃຫ້ພະນັກງານບໍຣິການລູກຄ້າ?
- ທ່ານຕ້ອງໄດ້ຮັບໃຊ້ພະນັກງານບໍ່ ໃນຕຳແໜ່ງຂອງທ່ານ? ຖ້າໄດ້ຮັບໃຊ້, ທ່ານເຮັດວິທີໃດແດ່?

2. ໃຫ້ເວົ້າວ່າ, ໃນພຣະທັມຕອນນີ້, ພວກເຮົາຈະໄດ້ເຫັນພຣະເຢຊູຄຣິດຊົງສອນພວກສາວົກເຣື່ອງຄວາມສຳເຣັດທີ່ເກີດຈາກການຮັບໃຊ້ ແລະການເຫັນແກ່ຄົນອື່ນ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ທົບທວນເບິ່ງເຫດການໃນມາຣະໂກ 9:1-29. ສັງເກດເບິ່ງການຊົງປ່ຽນລັກສນະພຣະກາຍຂອງພຣະເຢຊູທີ່ຢູ່ໃນມາຣະໂກ 9:1-8. ຖາມ: ທ່ານຄິດວ່າເຫດການນີ້ຊ່ວຍປ່ຽນແປງທັສນະຂອງເປໂຕ, ໂຢຮັນ, ແລະຢາໂກໂບກ່ຽວກັບພຣະເຢຊູບໍ່? ປ່ຽນແປງວິທີໃດ?

4. ອ່ານມາຣະໂກ 9:30-32 ແລະໃຫ້ທຸກຄົນຟັງເບິ່ງຄຳສອນຂອງພຣະເຢຊູ. ຖາມ: ທ່ານຄິດວ່າພຣະຄຳຂອງພຣະເຢຊູແຈ່ມແຈ້ງ ແລະກົງໄປກົງມາບໍ່? ຖ້າດັ່ງນັ້ນ, ເປັນຫຍັງພວກສາວົກຈຶ່ງບໍ່ເຂົ້າໃຈໃນເຣື່ອງທີ່ພຣະອົງຊົງໄດ້ກ່າວ? ທ່ານຄິດວ່າເປໂຕ, ໂຢຮັນ, ແລະຢາໂກໂບ ອາດຈະສັບສົນກວ່າສາວົກຄົນອື່ນໆບໍ່?

5.  ໃຫ້ຄົນນຶ່ງອ່ານມາຣະໂກ 9:33-34.   ຖາມ: ເປັນຫຍັງບາງຄັ້ງພວກເຮົາເຮັດຄືວ່າ ພຣະເຈົ້າບໍ່ຊົງຮູ້ວ່າພວກເຮົາກຳລັງເຮັດຫຍັງ ຫລືເວົ້າຫຍັງ? ພວກເຮົາຈະດຳເນີນຊີວິດຕ່າງໄປຈາກນີ້ບໍ່ ຖ້າພວກເຮົາຄິດສເມີວ່າພຣະເຢຊູຊົງຢູ່ກັບພວກເຮົາຕລອດເວລາ? ພວກເຮົາຈະເຕືອນສະຕິຕົວເອງໄດ້ຢ່າງໃດ ວ່າພຣະເຢຊູຊົງສະຖິດນຳເຮົາທຸກເວລາ? ຖາມ: ທ່ານຄິດວ່າການ "ເປັນໃຫຽ່" ມີຄວາມໝາຍແນວໃດສຳລັບພວກສາວົກ? ພານັກຮຽນຄິດເຖິງເຣື່ອງການເປັນໃຫຽ່ໃນຊີວິດຂອງພວກເຮົາວ່າມີແນວໃດແດ່? ເນັ້ນ: ການເປັນໃຫຽ່ໝາຍເຖິງຄົນອື່ນບໍ່ໄດ້ໃຫຽ່ເທົ່າ.

6.  ໃຫ້ເວົ້າວ່າ, ພຣະເຢຊູຊົງໃຊ້ເດັກນ້ອຍເພື່ອເປັນຕົວປະກອບສຳລັບການສອນບົດຮຽນນີ້.    ເດັກນ້ອຍໝາຍເຖິງຫຍັງ? ນຳພາການສົນທະນາວ່າມີກຸ່ມໃດແດ່ນອກຈາກພວກເດັກນ້ອຍທີ່ໝາຍເຖິງຄວາມຕ່ຳຕ້ອຍເຣື່ອງຖານະ. ຖາມ: ພວກເຮົາເຄີຍໄດ້ເມີນເສີຍກັບຄົນກຸ່ມນີ້ແນວໃດແດ່? ພວກເຮົາຈະຕ້ອນຮັບພວກຜູ້ຕ່ຳຕ້ອຍໄດ້ດ້ວຍວິທີໃດແດ່? ມີຫຍັງແດ່ທີ່ກ່ຽວຂ້ອງກັບການຖ່ອມຕົວລົງ ແລະການເປັນຜູ້ຮັບໃຊ້ຄົນທັງຫລາຍ (9:36)  ແລະການຕ້ອນຮັບເດັກນ້ອຍ (9:37)?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7.  ເຊີນນັກຮຽນໃຫ້ແບ່ງປັນເຣື່ອງບຸກຄົນຜູ້ນຶ່ງທີ່ພວກເຂົາເຈົ້າຮູ້ຈັກດີ ຊຶ່ງມີຕຳແໜ່ງ "ເປັນໃຫຽ່"  ແຕ່ມີນິສັຍຖ່ອມຕົວແບບຜູ້ຮັບໃຊ້.

8.  ພິຈາຣະນາເບິ່ງ <u>ປະຕິບັດຕາມຄຳສອນຂອງພຣະເຢຊູ</u> ໃນສ່ວນທ້າຍຂອງບົດຮຽນ.   ອ່ານແຕ່ລະຂໍ້. ພິຈາຣະນາເບິ່ງຂໍ້ສາມ. ຖາມ: ມີຈັກເທື່ອທີ່ທ່ານໄດ້ພະຍາຍາມ ທີ່ຈະເອົາທີ່ນຶ່ງໃຫ້ໄດ້? ໃຫ້ໂອກາດຕອບ. ເນັ້ນ, ການພະຍາຍາມເປັນນຶ່ງຂອງພວກເຮົາ ແຕກຕ່າງກັບການເປັນນຶ່ງໃນຄຳສອນຂອງພຣະເຢຊູ.   ຖາມ: ທ່ານຄິດເຫັນແນວໃດແດ່ນອກຈາກໃນບົດຮຽນນີ້ ທີ່ພວກເຮົາສາມາດຮັບໃຊ້ຄົນທັງຫລາຍທີ່ຢູ່ໃກ້ພວກເຮົາ? ຂຽນຄຳຕອບໃສ່ກະດານ. ຊັກຊວນແຕ່ລະຄົນໃຫ້ຊອກວິທີທີ່ຈະຮັບໃຊ້ຄົນທັງຫລາຍ ໃນອາທິດນີ້.

*ສຄ*

## <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນທີ 10</u>

## <u>ສາວົກ = ຂ້ອຍໃຊ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 10: 32-45

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ມາຣະໂກ 10: 1-45

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການເປັນສາວົກທີ່ແທ້ຂອງພຣະເຢຊູໝາຍເຖິງການເປັນຜູ້ຮັບໃຊ້, ບໍ່ແມ່ນເປັນນາຍ" ຂອງ "ຄົນທັງປວງ."

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານແມ່ນຂ້ອຍໃຊ້ບໍ່? ທ່ານຮູ້ສຶກແນວໃດເວລາຄົນເຮັດກັບທ່ານເໝືອນກັບເປັນຂ້ອຍໃຊ້?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊອກຫາວິທີທີ່ຈະຕອບຮັບຄຳສອນຂອງພຣະເຢຊູເຣື່ອງການເປັນຂ້ອຍໃຊ້.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ບອກວ່າ: ໃນຊີວິດນີ້, ພວກເຮົາແຕ່ລະຄົນຕ່າງກໍມີບຸກຄົນທີ່ພວກເຮົາຮັບໃຊ້ ແລະບຸກຄົນທີ່ຮັບໃຊ້ພວກເຮົາ. ແບ່ງກະດານເປັນສອງພາກ; ພາກທີນຶ່ງຂຽນຫົວຂໍ້ໃສ່ "ບຸກຄົນທີ່ພວກເຮົາຮັບໃຊ້" ແລະພາກທີສອງຂຽນ "ບຸກຄົນທີ່ຮັບໃຊ້ພວກເຮົາ." ໃຫ້ແຕ່ລະຄົນມີສ່ວນໃຫ້ຄຳເຫັນ ແລະຂຽນຄຳຕອບໃສ່ກະດານໃຫ້ຖືກບ່ອນ. ພິຈາຣະນາເບິ່ງສິ່ງທີ່ຂຽນໄວ້ ແລະຖາມວ່າ, ພວກເຮົາຮູ້ສຶກຢ່າງໃດໃນການເປັນຜູ້ຮັບໃຊ້? ທ່ານຮູ້ສຶກແນວໃດເວລາຮັບໃຊ້ຄົນອື່ນ? ໃຫ້ເວລາຕອບ ຫລືສົນທະນາ.

2. ໃຫ້ເວົ້າວ່າ, ໃນບົດຮຽນມື້ນີ້, ພວກເຮົາຈະຮຽນຮູ້ຄຳສອນຂອງພຣະເຢຊູ ແລະຈະເຫັນແບບຢ່າງທີ່ພຣະອົງຊົງໄດ້ໃຫ້ຄຣິສຕຽນ ເພື່ອການດຳເນີນຊີວິດທີ່ຮັບໃຊ້ຄົນອື່ນ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ພິຈາຣະນາເບິ່ງພຣະທັມມາຣະໂກ 10:1-31. ເບິ່ງຄຳສອນ ແລະພຣະບັນຊາເຣື່ອງການຢ່າຮ້າງ (10:1-13), ເຣື່ອງການຖ່ອມຕົວ (10:13-16), ແລະເຣື່ອງຊັບສົມບັດໃນໂລກ.

4. ອ່ານ 10:32. ຖາມ, ທ່ານຄິດວ່າເປັນຫຍັງພວກສາວົກຈຶ່ງປລາດໃຈ ແລະບາງຄົນກໍເກີດຄວາມຢ້ານກົວ.

5. ໃຫ້ຜູ້ນຶ່ງອ່ານ 10:33-34. ພານັກຮຽນປຽບທຽບພຣະຄຳຂອງພຣະເຢຊູຕອນນີ້ໃສ່ ມາຣະໂກ 9:31. ຖາມ: ທ່ານຄິດວ່າເປັນຫຍັງພຣະເຢຊູຈຶ່ງຊົງໃຫ້ລາຍລະອຽດຫລາຍຂຶ້ນໃນຄຳທຳນວາຍເຣື່ອງການຕາຍຂອງພຣະອົງ (10:33-34).

6. ອ່ານ ມາຣະໂກ 10: 35-40. ນຳພາການສົນທະນາໂດຍໃຊ້ຄຳຖາມຕໍ່ໄປນີ້:

- ການນັ່ງທີ່ເບື້ອງຂວາ ຫລືເບື້ອງຊ້າຍມີຄວາມສຳຄັນແນວໃດ (10:37, 40)?

- ທ່ານຈະອະທິບາຍຄຳຮ້ອງຂໍຂອງຢາໂກໂບແລະໂຢຮັນວິທີໃດ ເວລາເບິ່ງພຣະຄຳຂອງພຣະເຢຊູໃນມາຣະໂກ 10:33-34?
- ພວກເຮົາເຄີຍໄດ້ຍິນຄຳສອນທີ່ຍາກ ແຕ່ແຈ່ມແຈ້ງດີຈາກພຣະເຢຊູແລ້ວພວກເຮົາພາກັນບໍ່ເຮັດ, ເຂົ້າໃຈຜິດ, ຫລືປ່ຽນເຣື່ອງລົມ ບໍ່?

ອະທິບາຍ "ຈອກ" ແລະ "ບັບຕິສະມາ" ໃນມາຣະໂກ 10:38-39. ຖາມ: ຄຣິສຕຽນຈະມີສ່ວນໃນຈອກ ແລະການບັບຕິສະມາຂອງພຣະເຢຊູໄດ້ວິທີໃດແດ່?

7. ໃຫ້ຜູ້ນຶ່ງອ່ານ ມາຣະໂກ 10:41-44. ອະທິບາຍເຣື່ອງ "ຄ່າໄຖ່" ວ່າໝາຍຄວາມວ່າຢ່າງໃດ (ພຣະເຢຊູເປັນຄ່າໄຖ່ສຳລັບມະນຸດທັງຫລາຍ). ຖາມ: ທ່ານຄິດວ່າພວກສາວົກເຂົ້າໃຈພຣະຄຳຂອງພຣະເຢຊູໃນຕອນນີ້ວ່າມີຫຍັງພົວພັນກັບຄຳທຳນວາຍເຣື່ອງການຕາຍຂອງພຣະອົງ ບໍ່ (10:33-34)? ບອກວ່າ: ພຣະເຢຊູໄດ້ຊົງ "ມອບຊີວິດຂອງພຣະອົງ" ເພື່ອການຮັບໃຊ້ມະນຸດທັງຫລາຍ. ໃນອະເມຣິກາ, ພວກເຮົາອາດຈະບໍ່ໄດ້ສະລະຊີວິດເພື່ອການຮັບໃຊ້; ເຖິງປານນັ້ນ, ພວກເຮົາມີວິທີອື່ນອີກບໍ່ ທີ່ຈະສະແດງໃຫ້ເຫັນເຖິງການຖວາຍຊີວິດເພື່ອການຮັບໃຊ້ພຣະເຈົ້າ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ສົນທະນາໂດຍໃຊ້ຄຳຖາມໃນພາກສຸດທ້າຍຂອງບົດຮຽນ. ຖາມ: ຄຣິສຕຽນຈຳເປັນຕ້ອງສະແດງຄວາມເປັນຜູ້ຮັບ ໃຊ້ໃນສັງຄົມຂອງຄົນທີ່ບໍ່ເຊື່ອບໍ່? ຄຣິສຕຽນຈຳເປັນຕ້ອງອະທິບາຍການຮັບໃຊ້ຂອງຕົນວ່າເປັນສິ່ງທີ່ເກີດຂຶ້ນເພາະຄວາມເຊື່ອບໍ່? ເປັນຫຍັງ?

9. ອະທິບາຍຄຳວ່າ "ສາວົກ" ຊຶ່ງໝາຍເຖິງນັກຮຽນ. ໃນພຣະຄັມພີ, ຄຣິສຕຽນແມ່ນສາວົກ ແລະພຣະເຢຊູຊົງເປັນພຣະອາຈານ. ຫົວຂໍ້ບົດຮຽນນີ້ແມ່ນ "<u>ສາວົກ = ຂ້ອຍໃຊ້.</u>" ເຣື່ອງທີ່ວ່າມະນຸດເຮົາຮຽນຮູ້ໂດຍການຮັບໃຊ້ ມີຄວາມຈິງຫລາຍປານໃດ? ໃຫ້ເວລາເພື່ອການແບ່ງປັນຕົວຢ່າງຂອງການຮຽນຮູ້ໂດຍການຮັບໃຊ້, ຖາມ: ເປັນຫຍັງພຣະເຢຊູຈຶ່ງຊົງສອນເຣື່ອງການຮັບໃຊ້ໂດຍໃຫ້ແບບຢ່າງພ້ອມ?

10. ສລູບບົດຮຽນໂດຍການພິຈາຣະນາຄຳຖາມຕໍ່ໄປນີ້: ທ່ານຈະຕອບຮັບຄຳສອນຂອງພຣະເຢຊູໃນພຣະທັມຕອນນີ້ແນວໃດ, ເມື່ອຄິດເຖິງສິ່ງທີ່ພຣະເຢຊູໄດ້ຊົງກະທຳສຳລັບຊີວິດຂອງທ່ານ?

*ສຄ*

# <u>ບົດແນະນຳຄຣູສອນ</u>

# <u>ບົດຮຽນທີ 11</u>

# <u>ຕຽມພ້ອມທຸກເວລາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 13:9-13, 32-35

**<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u>** ມາຣະໂກ 13

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພວກສາວົກພົບອັນຕລາຍເຖີງຂັ້ນເສັຽຊີວິດ ແຕ່ຍັງດຳເນີນໂດຍພຣະວິນຍານ

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະເປັນຄືສາວົກໄດ້ຫລາຍປານໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສຳຣວດຕົນເອງວ່າເຮົາໄດ້ເຮັດແທ້ເທົ່າໃດໃນຄວາມເຊື່ອຂອງເຮົາ.

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ບົດນຳ</u>

ຕຽມເອົາຮູບໂບດໃຫຍ່ທີ່ສວຍງາມ ຫລືເອົາຮູບຕຶກສອງຕຶກທີ່ມີອຍອກກໍໄດ້, ຫາກຫາບໍ່ໄດ້ຈະເອົາຮູບອັນໃດທີ່ສວຍງາມມາຕິດໄວ້ຝາຫລືກະດານ. ເມື່ອອ້ອນວອນແລ້ວ ຖາມນັກຮຽນຂໍໃຫ້ນັກຮຽນພັລະນາຮູບແລະປະມານມູນຄ່າຂອງຕຶກ. ຈາກນັ້ນຂໍໃຫ້ຜູ້ນຶ່ງອ່ານ

<u>ມາຣະໂກ 13:1-4 ຫົວຂໍ້: ຊົງທຳນວາຍເຣື່ອງພຣະວິຫານ</u>

1. ເບື້ອງຫລັງຄວາມເປັນມາຂອງພຣະວິຫານ.
   ອີງຕາມປະຫວັດສາດແລ້ວແມ່ນເຮໂຣດຜູ້ຍິ່ງໃຫຍ່ ຫລືບາງຄົນຮ້ອງເພິ່ນວ່າເຮໂຣດມະຫາຣາດເປັນຜູ້ສ້າງພຣະວິຫານອັນສວຍງາມນີ້ໃນປີກ່ອນ ຄ.ສ 20 (20 B.C) ແລະສຳເຣັດລົງໃນປີ ຄ.ສ 64 (A.D. 64). ນັບວ່າເປັນເວລາ 84 ປີ ຈຶ່ງສຳເຣັດ, ຫີນຝາພຣະວິຫານທີ່ນຳເອົາມາສ້າງນັ້ນມີຂນາດ 10x12 ft ຫລື 3x3.6 ແມດ ສ່ວນຫີນພື້ນນັ້ນໃຫຍ່ກວ່ານັ້ນອີກ. ສາສນາສາດບາງຄົນຍັງໄດ້ສັນນິຖານວ່າຫີນນັ້ນຍາວ 60 ft ແລະສູງ 40 ft ຊຶ່ງເປັນຫີນຂນາດໃຫຍ່ທີ່ສຸດ ໃນສມັຍທີ່ບໍ່ມີເຄື່ອງກົນຈັກຄືສມັຍນີ້.
2. ສາວົກບອກໃຫ້ພຣະເຢຊູເບິ່ງແລະຊົມຄວາມງາມຂອງພຣະວິຫານ ເພາະສະອອນຫີນແຜ່ນໃຫຍ່ທີ່ນຳມາສ້າງ, ເມື່ອທອດພຣະເນດແລ້ວ ຊົງກ່າວວ່າ *"ທ່ານເຫັນຕຶກໃຫຍ່ເຫລົ່ານີ້ຫລືກ້ອນຫີນທີ່ຊ້ອນທັບກັນຢູ່ນີ້ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ" (ຂໍ້ 2)* ພຣະວິຫານຫລັງນີ້ນັບວ່າເປັນທີ່ຈັບໃຈຂອງຜູ້ຄົນທັງຫລາຍໃນສມັຍບູຮານ ດ້ວຍວ່າຄວາມໃຫຍ່ສູງ, ຄວາມສວຍງາມ, ການອອກແບບສ້າງ ຮວມທັງຫີນທີ່ນຳມາສ້າງ ເຮັດໃຫ້ຄົນທັງຫລາຍພໍໃຈໃນພຣະວິຫານ. ພຣະເຢຊູທຳນວາຍລ່ວງໜ້າວ່າພຣະວິຫານນີ້ຈະຖືກທຳລາຍ.
3. ຫລັງຈາກພວກສາວົກພາກັນຕົກຕະລຶງແລ້ວກໍພາກັນຕັ້ງຄຳຖາມ ໃນຂໍ້ 4 *"ເຫດການເຫລົ່ານີ້ຈະບັງເກີດຂຶ້ນເມື່ອ*

*ໃດ"?   "ສິ່ງໃດຈະເປັນໝາຍສຳຄັນ"*

**<u>ອ່ານມາຣະໂກ 13:5-8 ໝາຍສຳຄັນ</u>**

1. ພຣະເຢຊູບໍ່ໄດ້ຕອບຄຳຖາມ ແຕ່ເຕືອນວ່າ "ຈົ່ງຣະວັງ" ແປວ່າມີສະຕິຣະວັງຕົວຕໍ່ເຫດການທີ່ຈະເກີດຂຶ້ນ.
2. ຈາກຂໍ້ 6-8 ສລູບດັ່ງນີ້;   ກ.ຈະມີພວກຜູ້ທຳນວາຍປອມ, ຄຣູສອນປອມອ້າງວ່າເປັນຜູ້ທຳນວາຍຈາກພຣະເຈົ້າ.
   ຂ. ຈະມີເສິກສົງຄາມເກີດຂຶ້ນ.   ຄ. ຈະມີແຜ່ນດິນໄຫວໃນບ່ອນຕ່າງໆ   ງ. ຈະມີການອຶດຢາກເກີດຂຶ້ນ.

**<u>ອ່ານມາຣະໂກ 13:9-13 ໂລກຈະກຽດຊັງທ່ານ</u>**

1. ເຂົາຈະຈັບຂຶ້ນສານ,   ຄຳວ່າສານໃນຕອນນີ້ໝາຍເຖິງສານທ້ອງຖິ່ນຊຶ່ງປະກອບດ້ວຍພວກຜູ້ໃຫຍ່ທ້ອງຖິ່ນ  ແລະ ຜູ້ດູແລໂຮງທັມມະເທສນາ.
2. ເຂົາຈະຂ້ຽນຕີຕາມກົດຣະບຽບຂອງຢິວເຖິງ 40 ຄັ້ງ (ພຣະບັນຍັດສອງ 25:2-3).
3. ຈະໄດ້ຢືນຢູ່ຕໍ່ໜ້າຜູ້ປົກຄອງ ໝາຍເຖິງຢືນຢູ່ຕໍ່ຫໜ້າພວກເຈົ້າເມືອງ, ຢືນຢູ່ຕໍ່ ໜ້າເຈົ້າຊີວິດເພື່ອສືບສວນແລະລົງ ໂທດ.
4. ຊົງເລົ້າໂລມໃຈບໍ່ໃຫ້ຄຶດຍາກວ່າຈະເວົ້າແນວໃນທີ່ສານ ເພາະວ່າພຣະວິນຍານພຣະເຈົ້າຈະເປັນຜູ້ເວົ້າແທນ (ຂໍ້ 11)

**<u>ອ່ານມາຣະໂກ 13:32-37 ຈົ່ງຣະວັງ</u>**

1. ເຕືອນໃຫ້ຣະວັງຫລາຍເທື່ອເຊັ່ນ ຂໍ້ 5, 9, 23, 33, 35, ແລະ 37  ເພາະຊົງເປັນຫ່ວງຫລາຍ.
2. ເຣື່ອງວັນທີ່ພຣະເຢຊູຈະກັບມານັ້ນບໍ່ມີໃຜຮູ້ ເພາະວ່າຈະເປັນໄປຕາມວັນເວລາຂອງພຣະບິດາຊຶ່ງພຣະເຢຊູຖ່ອມຕົວ ເຮັດຕາມນ້ຳພຣະທັຍພຣະບິດາ (ຂໍ້ 32).
3. ຈາກຂໍ້ 34-37 ພຣະເຢຊູຊົງກ່າວກັບສາວົກເປັນຄຳອຸປະມາເພື່ອເຕືອນສະຕິສາວົກຂອງພຣະອົງ ໃຫ້ມີສະຕິຣະວັງ ຕົວຢູ່ທຸກເວລາ.
4. ຄຳອຸປະມານີ້ແມ່ນພຣະເຢຊູເວົ້າເຣື່ອງຂອງພຣະອົງຈະກັບຄືນມາຄັ້ງທີສອງ.
5. ໃນຂະນະທີ່ພຣະອົງບໍ່ທັນກັບມານີ້ ພຣະອົງໄດ້ມອບອຳນາດໃຫ້ຜູ້ຮັບໃຊ້ພຣະອົງທຸກຄົນຕາມການງານຂອງໃຜ ລາວ, ທຸກຄົນທີ່ເຮັດໜ້າທີ່ການງານຈະໄດ້ຮັບລາງວັນຕາມການນັ້ນ.

*ຫວ*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ບໍ່ແມ່ນຂ້ອຍດອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14:10-31
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມາຣະໂກ 14:1931
**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າເຮົາມີຊີວິດໃໝ່ໃນພຣະເຢຊູ
**ຄຳຖາມເພື່ອການສຳຣວດ:** ເຮົາຈະປ້ອງກັນຕົວແນວໃດບໍ່ໃຫ້ຫລົງທາງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳພາເຮົາໃຫ້ລະນຶກເຖິງພຣະຄຸນພຣະເຈົ້າ ໂດຍວາງໃຈເຊື່ອຢ່າງແທ້ຈິງ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ພຣະທັມມາຣະໂກແມ່ນ 1 ໃນຈຳນວນພຣະທັມຂ່າວປະເສີດທັງ 4 ແລະຍັງເປັນຂ່າວປະເສີດທີ່ສັ້ນກວ່າເຫລັ້ມອື່ນ ແຕ່ເປັນ ເຫລັ້ມແຮກຂອງຂ່າວປະເສີດ (Gospel) ຈຸປສົງຂອງການຂຽນພຣະທັມຂອງຜູ້ປະກາດມາຣະໂກແມ່ນເພື່ອເລົ້າໂລມໃຈຊາວຢິວທີ່ອາສັຍໃນກຸງໂຣມ ໂດຍບັນທຶກຈາກເຫດການນຶ່ງຕໍ່ໄປເຖິງເຫດການນຶ່ງ, ເພື່ອພິສູດວ່າພຣະເຢຊູແມ່ນ Messiah ຫລືພຣະຜູ້ຖືກຫົດສົງ ຫລືອາຈແປວ່າຄຳວ່າ Messiah ຜູ້ທີ່ພຣະເຈົ້າສົ່ງລົງມາໂຜດ ຫລືພຣະຜູ້ໂຜດໃຫ້ພົ້ນ.

1. ນຳເອົານ້ຳຫອມຣາຄາແພງ ຫລືເອົາຮູບນ້ຳຫອມຣາຄາແພງຈາກປຶ້ມມາຫ້ອງຮຽນ ຖາມນັກຮຽນວ່າ ນ້ຳຫອມກັບນ້ຳລ້າມີຄ່າຣາຄາແຕກຕ່າງກັນຢ່າງໃດ? ໃຫ້ເວລານັກຮຽນຕອບເລັກນ້ອຍ.

2. ບອກນັກຮຽນວ່າພຣະເຢຊູປຽບເໝືອນນ້ຳຫອມຣາຄາແພງນັ້ນ ເຮົາທັງຫລາຍເປັນຄົນມີກິ່ນໂຕແຕ່ເມື່ອອາບດ້ວຍນ້ຳຫອມແລ້ວກໍບໍ່ມີກິ່ນອີກ ແຕ່ຫລາຍຄົນໄດ້ເຮັດໃຫ້ຕົນເອງກັບໄປມີກິ່ນເໝັນອີກ. ບົດຮຽນວັນນີ້ຈະເວົ້າກັນໃນເຣື່ອງຢູດາແລະເປໂຕ ຜູ້ອາບດ້ວຍນ້ຳຫອມແລ້ວ ຖອນຕົວອອກໄປເຮັດໃຫ້ຕົນເອງມີກິ່ນເໝັນອີກ.

### 3. ອ່ານ14: 10-21 ຜູ້ນຶ່ງຈະທໍຣະຍົດ

ກ. ອະທິບາຍ ຢູດາຂາຍພຣະເຢຊູ.
ຂ. ອະທິບາຍ ຊົງໃຊ້ເປໂຕແລະໂຢຮັນໄປຈັດແຈງປັສຄາ (ລູກ 22:7-88)
ຄ. ຊົງບອກວ່າຈະພົບຊາຍຄົນນຶ່ງແບກໄຫນ້ຳແລ້ວຕາມລາວໄປ ແລະຖາມບ່ອນຈະກິນປັສຄາ ລາວຈະບອກວ່າຢູ່ຫ້ອງຊັ້ນເທິງ. ຖາມນັກຮຽນວ່າເປັນຫຍັງທຸກຢ່າງຈຶ່ງເປັນໄປຕາມພຣະເຢຊູຊົງບອກລ່ວງໜ້າ?. ຊາຍທີ່ແບກໄຫ

ນໍ້າ ເປັນສິ່ງໜ້າຖາມ ເພາະວ່າອາດຈະບໍ່ແບກໄຫນໍ້າຕລອດເວລາ. ໃຫ້ເວລານັກຮຽນຕອບ.

ງ. ຫລັງຈາກສາວົກທັງສອງຈັດແຈງບ່ອນໄວ້ຮຽບຮ້ອຍແລ້ວພຣະເຢຊູແລະສາວົກທັງໝົດກໍມາທີ່ນັ້ນ ແລະທໍານວາຍວ່າ ນຶ່ງໃນຈໍານວນສິບສອງຄົນຈະທໍຣະຍົດພຣະອົງ ຫາກທ່ານເປັນນຶ່ງໃນຈໍານວນສິບສອງທ່ານຈະເຮັດແນວໃດ? ໃຫ້ເວລານັກຮຽນຕອບ.

## 4. ອ່ານ14:22-25 ຊົງຕັ້ງສິນມະຫາສະນິດ

ກ. ອະທິບາຍ ປັສຄາແມ່ນການກິນເຂົ້າຈີ່ບໍ່ມີເຊື້ອແປ້ງທີ່ກຸງເຢຣູຊາເລັມ ເພື່ອລະນຶກເຖິງການຊົງໄຖ່ອອກຈາກການເປັນຂ້າທາດທີ່ເອຢິບ.

ຂ. ອະທິບາຍ ຄວາມໝາຍໃໝ່ທີ່ພຣະເຢຊູພາສາວົກກິນຄັ້ງນີ້ແມ່ນ ພຣະອົງຕັ້ງພິທີສິນມະຫາສນິດ ໃນຣະຫວ່າງຄາບເຂົ້າແລງ.

ຄ. ເຂົ້າຈີ່ມີຄວາມໝາຍວ່າຮ່າງກາຍອັນແຕກຫັກຂອງພຣະອົງ, ນໍ້າອະງຸ່ນແມ່ນແທນພຣະໂລຫິດຂອງພຣະອົງທີ່ໄຫລອອກມາທີ່ໄມ້ກາງແຂນເພື່ອຊໍາຣະລ້າງຄວາມຜິດບາບຂອງຄົນທັງປວງ.

ງ. ມັດທາຍ, ມາຣະໂກ ແລະລູກາ ໄດ້ບັນທຶກເຫດການດຽວກັນແຕ່ເຫັນຄົນລະມຸມ ຜູ້ນຶ່ງວ່າຕອນແລງ, ຜູ້ນຶ່ງວ່າຄໍ່າ ຜູ້ນຶ່ງວ່າເມື່ອເຖິງໂມງແລ້ວ. ຄໍາວ່າໂມງຫລືແລງແມ່ນເວລາດຽວກັນທີ່ອິສຣາເອນຖືກປົດປ່ອຍຈາກເອຢິບ.

ຈ. ໂບດແຕ່ລະໂບດຈະຮ້ອງສິນຫລືພິທີນີ້ວ່າສິນມະຫາສນິດຕາມຫົວຂໍ້ພຣະຄັມພີ ບາງໂບດຈະຮ້ອງວ່າສິນລະນຶກເພາະພຣະເຢຊູຊົງສັ່ງວ່າ ຈົ່ງເຮັດຢ່າງນີ້ເພື່ອລະນຶກເຖິງພຣະອົງ (ລູກາ 22:19).

ສ. ພຣະເຢຊູບໍ່ໄດ້ບອກໃຫ້ເຮັດທຸກອາທິດ ຫລືທຸກເດືອນ ຫລືທຸກປ ດັ່ງນັ້ນໂບດແຕ່ລະໂບດຈຶ່ງເຮັດຕາມຄວາມເຫມາະສົມຂອງໃຜລາວ. ສ່ວນຄະນະບັບຕິດຈະເຮັດພິທີນີ້ ສຸດແລ້ວແຕ່ໂອກາດ.

## 5. ອ່ານ 14:26-31 ຊົງເຕືອນຄັ້ງສຸດທ້າຍ

ກ. ທີ່ພູເຂົາໝາກກອກເທດພຣະອົງຊົງເລົ່າເຖິງພຣະທັມ ເຊຂາຣີຢາ 13:7 *ມີຄໍາຂຽນໄວ້ໃນພຣະຄັມພີວ່າ "ເຮົາຈະປະຫານຜູ້ລ້ຽງແກະ ແລະແກະຝູງນັ້ນຈະແຕກຊະກັນໄປ.* ຊົງບອກເປັນປິສນາວ່າເມື່ອພຣະອົງຖືກຈັບແລະນໍາໄປປະຫານພວກສາວົກຈະແຕກຊະກັນໄປ.

ຂ. ເມື່ອໄດ້ຍິນດັ່ງນັ້ນສາວົກກໍພາກັນສະດຸດໃຈ ເພາະຕ່າງຄົນກໍແນ່ໃຈໃນຄວາມເຊື່ອຂອງຕົນເອງ.

ຄ. ເປໂຕກ່າວດ້ວຍໃຈກ້າວ່າ ເຖິງແມ່ນຜູ້ອື່ນຈະສະດຸດແຕ່ຂ້ານ້ອຍຈະບໍ່ສະດຸດ (ຫລືບໍ່ແມ່ນຂ້ານ້ອຍ). ແຕ່ພຣະເຢຊູຊົງບອກວ່າແມ່ນທ່ານນັ້ນແຫລະຈະປະຕິເສດພຣະອົງ.

ງ. ເມື່ອເປໂຕຢັ້ງຢືນຢ່າງກ້າຫານເຊັ່ນນັ້ນ ສາວົກຄົນອື່ນກໍຢັ້ງຢືນຄວາມເຊື່ອຂອງເຂົາເຊັ່ນກັນ *ຝ່າຍພວກສາວົກກໍທູນຢ່າງນັ້ນເຫມືອນກັນທຸກຄົນ* ຂໍ້ 31.

ຈ. ເຣື່ອງທີ່ເກີດຂຶ້ນໃນແລງວັນນີ້ມີສອງຄົນທໍຣະຍົດພຣະເຢຊູຄື; ຢູດາ ຜູ້ຮັກຊັບສົມບັດຝ່າຍໂລກ ແລະເປໂຕຜູ້ຂີ້ຢ້ານ.

*ຫວ*

# <u>ບົດແນະນຳຄູສອນ</u>
# <u>ບົດຮຽນທີ 13</u>
# <u>ຂ່າວດີໃນເລື່ອງຮ້າຍ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14:61-64; 15:9-24, 37-41; 16:1-8

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ມາຣະໂກ 14:32--16:1-8

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊັກຊວນໃຫ້ເຊື່ອວ່າພຣະເຢຊູຊະນະຄວາມຕາຍ.

**<u>ຄຳຖາມເພື່ອການສຳຣວດ:</u>** ການຕາຍແລະການຄືນມາຂອງພຣະເຢຊູມີຜົນຕໍ່ຊີວິດເຮົາແນວໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ການຖືກຄຶງໃຫ້ຕາຍແລະການຟື້ນພຣະຊົນແມ່ນໄຊຊະນະ

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.

**<u>ບົດນຳ</u>**

ການຕາຍຂອງພຣະເຢຊູເປັນການຕາຍແບບທຸກທໍຣະມານແສນສາຫັດ ເລີ່ມແຕ່ສາວົກຜູ້ນື່ງທໍຣະຍົດ ອີກຜູ້ນື່ງປະຕິເສດວ່າບໍ່ຮູ້ຈັກພຣະອົງ ນອກຈາກນັ້ນຍັງຖືກທຸບຕີທີ່ວ່າງກາຍຈົນເລືອດຫລັ່ງໄຫລບໍ່ເຊົາ, ຜູ້ຄົນດ່າວ່າປະນາມແລະຖົ່ມນໍ້າລາຍໃສ່ໜ້າໃສ່ຕາ, ກາງແຂນທີ່ເຂົາຄຶງພຣະອົງກໍບໍ່ແມ່ນຕັ້ງໄວ້ແລ້ວທີ່ໂຄລະໂກທາ ພຣະອົງໄດ້ຊົງຖືກບັງຄັບໃຫ້ແບກກາງແຂນນັ້ນໃນຂະນະທີ່ອ່ອນເພັຽດ້ວຍຄວາມອຶດຫິວແລະເຈັບປວດທັງຮ່າງກາຍ ເຂົາຍັງເອົາຕາປູຕອກຕີນແລະມືອີກ. ການຕາຍຂອງພຣະອົງເປັນເລື່ອງຖືກຂ້າທີ່ໂຫດຮ້າຍທີ່ສຸດ ແຕ່ມັນກັບກາຍເປັນຂ່າວດີສຳລັບມະນຸດທັງປວງດ້ວຍວ່າການຕາຍຂອງພຣະອົງນັ້ນແມ່ນຕາຍເພື່ອໃຊ້ໂທດແຫ່ງຄວາມຜິດແລະບາບຂອງຄົນທັງປວງ.

## <u>ອ່ານ 14: 61-64 ພຣະເຢຊູຂຶ້ນສານ</u>

ກ. ພຣະເຢຊູບໍ່ຕອບຄຳຖາມກ່ອນນີ້ກໍເພາະວ່າຄຳກ່າວຫາຂອງເຂົາກໍຍັງບໍ່ຖືກຕ້ອງກັນ. (ເບິ່ງຂໍ້ 59).

ຂ. ເມື່ອປະໂຣຫິດຖາມອີກວ່າ *"ເຈົ້າເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າຜູ້ຊົງຄວາມສຸກຫລີ"* ເປັນເລື່ອງຈິງທີ່ພຣະເຢຊູຊົງເປັນຢູ່ ພຣະອົງຈຶ່ງຕອບເຂົາ (ຂໍ້ 61).

ຄ. ຍັງຊົງບອກເຂົາອີກໃນເລື່ອງອະນາຄົດ ພ້ອມທັງການກັບຄືນມາຄັ້ງທີສອງຂອງພຣະອົງອີກ (ຂໍ້ 62).

ງ. ປະໂຣຫິດຈີກເສື້ອຕົນເອງເປັນການບໍ່ພໍໃຈທີ່ ເພາະຄິດວ່າພຣະເຢຊູກຳລັງໝິ່ນປມາດພຣະເຈົ້າ (ຂໍ້ 63-64).

ຈ. *"ຜູ້ໃດທີ່ຫມິ່ນປມາດພຣະນາມຂອງພຣະເຈົ້າຈະຕ້ອງຖືກໂທດເຖິງຕາຍ ໃຫ້ຊຸມນຸມຊົນຄວ່າງກ້ອນຫີນໃສ່ເຂົາເສັຽໃຫ້ຕາຍ ຄົນຕ່າງດ້າວຫລືຊາວເມືອງກໍດີ ເມື່ອເຂົາຫມິ່ນປມາດພຣະນາມ ຈະຕ້ອງຖືກໂທດເຖິງຕາຍ* (ພຣະທັມ ລະບຽບພວກເລວີ 24:16)

**ອ່ານ 15:9-20 ພຣະເຢຊູຕໍ່ໜ້າປີລາດ**

1. ໂຣມັນເປັນເຈົ້ານາຍປົກຄອງຢິວ ດັ່ງນັ້ນການຕັດສິນຄວາມໃຫຍ່ຕ້ອງແມ່ນຣັຖບານໂຣມັນ.
2. ເຂົາພາພຣະເຢຊູໄປຫາປີລາດຜູ້ທີ່ຣັຖບານໂຣມັນແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຊາດຢິວ ພວກປະໂຣຫິດແລະພວກຢິວຫວັງໃຈຈະໃຫ້ປີລາດຕັດສິນປະຫານພຣະເຢຊູ.
3. ໃນເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງນີ້ ແມ່ນພິທີລະນຶກເຖິງການຮັບເອກຣາດຈາກເອຢິບ ແລະເຂົາຈະປ່ອຍນັກໂທດຜູ້ນຶ່ງເພື່ອສລອງເທສການ. (ປະເທດລາວເມື່ອກ່ອນນີ້ ເຄີຍມີການຜ່ອນໂທດພວກນັກໂທດໃນວັນເກີດເຈົ້າຊີວິດຂອງລາວ).
4. ປີລາດຖາມເຂົາວ່າ *"ເຈົ້າທັງຫລາຍຢາກໃຫ້ເຮົາປ່ອຍກະສັດຂອງຊາດຢິວໃຫ້ພວກເຈົ້າຫລື"* (ຂໍ້ 8-9). ມີສອງເຫດຜົນຄື; 1. ເປັນທຳນຽມຂອງຊາວຢິວ ເມື່ອສລອງປັສຄາແນວນີ້. 2. ຄິດຢາກຊ່ອຍພຣະເຢຊູ. ແຕ່ເຮົາຮູ້ແລ້ວວ່າພຣະເຢຊູຊົງເປັນພຣະເຈົ້າ ບໍ່ຕ້ອງການຄວາມຊ່ອຍເຫລືອຈາກມະນຸດໜ້າໃດທັງສິ້ນ.
5. ປີລາດເອົາໃຈປະຊົນກໍເລີຍຍອມໃຫ້ເຂົາຄືງພຣະເຢຊູ (ຄຶນດີ) ແລ້ວປ່ອຍຄົນຊົ່ວໃຫ້ພົ້ນໂທດ.
6. ສີມ່ວງເປັນສີຂອງກະສັດ ດັ່ງນັ້ນເຂົາຈຶ່ງເອົາເສື້ອສີມ່ວງມາຄຸມໃຫ້ພຣະເຢຊູ ເພື່ອເປັນການເຍາະເຍີ້ຍ (ຂໍ້ 17).
7. ເຂົາຍັງໄດ້ຂຽນປ້າຍຄຳເວົ້າທີ່ເຍາະເຍີ້ຍວ່າ *"ກະສັດຂອງຊາດຢິວເອີຍ, ຈົ່ງຊົງພຣະຈະເຣີນເທີນ"* (ຂໍ້ 18).

**ອ່ານ 15:21-24 , 37-41 ທີ່ໂຄລະໂກທາ**

1. ໂຄລະໂກທາ ແມ່ນພາສາອາຣາມິກ ແປວ່າພູຫົວກະໂຫລກ ໃຊ້ເປັນບ່ອນປະຫານນັກໂທດ.
2. ພຣະເຢຊົງແບກກາງແຂນດ້ວຍຄວາມທຸກທໍຣະມານໄປໂຄລະໂກທາ.
3. ຊີໂມນຊາວອາຟຣິກາເໜືອເປັນຜູ້ຊ່ອຍແບກກາງແຂນຂອງພຣະເຢຊູ.
4. ເຂົາເຄີຍເອົາເຫລົ້າແວງກັບຢາງໄມ້ຫອມມາໃຫ້ນັກໂທດປະຫານໄດ້ກິນດື່ມກ່ອນຕາຍ.
5. *"ເອລີ ໆ ແລມາ ຊາບັກທານີ "ແປວ່າພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສັຽ "* (ມັດທາຍ 27:46).
6. ຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງຕ່ອນຕັ້ງແຕ່ເທິງຈົນເຖິງລຸ່ມ ແມ່ນການອັສຈັນເຮັດໃຫ້ພວກນາຍຮ້ອຍເຊື່ອວ່າພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ.

**ອ່ານ 16:1-8 ພວກຜູ້ຍິງພົບອຸບໂມງຫວ່າງເປົ່າ**

1. ຜູ້ຍິງກຸ່ມນີ້ຢືນເຝົ້າພຣະເຢຊູທີ່ໄມ້ກາງແຂນຈົນເຖິງນາທີສຸດທ້າຍໃນແລງວັນສຸກ, ແລະເຂົາກໍພາກັນຕຽມນ້ຳຫອມເພື່ອທາສົງພຣະສົບແຕ່ເຊົ້າມືດຂອງວັນອາທິດ.
2. ເຂົາຄິດຍາກຈະເປີດປາກຖ້ຳແຕ່ເທວະດາເປີດໃຫ້ແລ້ວ ແລະເມື່ອເຂົ້າໄປກໍບໍ່ມີພຣະເຢຊູຢູ່ທີ່ນັ້ນ ເພາະຊົງຟື້ນແລ້ວ.
3. ເທວະດາຕົນນັ້ນໄດ້ບອກພວກຜູ້ຍິງໃຫ້ໄປບອກຂ່າວນີ້ແກ່ພວກສາວົກ, ພວກນາງຈຶ່ງແລ່ນໄປດ້ວຍຄວາມຍິນດີ.

*ທວ*

# ບົດແນະນຳຄູສອນ
# ບົດຮຽນເລື່ອງຄຣິສມາສ
# ສະຫງ່າຣາສີຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 2:1-20
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ 2:1-20
**ຈຸດສຳຄັນຂອງບົດຮຽນນີ້:** ໃຫ້ເຂົ້າໃຈເຣື່ອງພຣະເຈົ້າສົ່ງພຣະບຸດລົງມາເກີດ ເພື່ອເຮົາຈະໄດ້ສັຣເສີນ.
**ຄຳຖາມເພື່ອການສຳຣວດ:** ເປັນຫຍັງການເກີດຂອງພຣະເຢຊູຈຶ່ງເຮັດໃຫ້ເຮົາຍິນດີແທ້?
**ຈຸດປະສົງຂອງບົດຮຽນນີ້:** ເຂົ້າໃຈຄວາມໝາຍການສະເດັດມາຂອງພຣະເຢູຄຣິດ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ເຊື່ອຟັງຮັບໃຊ້ພຣະເຢຊູໂດຍການເບິ່ງຜູ້ປ່ວຍ, ຜູ້ອ່ອນແອທາງຈິດວິນຍານ ແລະຜູ້ມີຄວາມທຸກໃຈ.

## ບົດນຳ

1. ເມື່ອອ້ອນວອນແລ້ວຂຽນຫົວຂໍ້ບົດຮຽນໃສ່ກະດານ ແລ້ວຖາມວ່າທ່ານເຄີຍໄດ້ຍິນຄຳວ່າຄຣິສມາສຄັ້ງແຣກຢູ່ໃສ? ເມື່ອໄດ້ຍິນແລ້ວຄິດແນວໃດ?

2. ຢາຍກະດາດເປົ່າໃຫ້ນັກຮຽນເພື່ອຂຽນ ຄວາມຈຳເຣື່ອງວັນຄຣິສມັສທີ່ມັກທີ່ສຸດ ແມ່ນປີໃດ? ເປັນຫຍັງຈຶ່ງມັກ? ແລ້ວໃຫ້ນັກຮຽນເວົ້າຕາມທີ່ໄດ້ຂຽນລົງກະດາດ ຈັກ 2 ນາທີ

### 3. ອ່ານ 2:1-7 ໂຢເຊບແລະມາຣີອາຜູ້ເຊື່ອຟັງ

ກ. ພຣະເຈົ້າສຳແດງໃຫ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າ ໂດຍໃຫ້ນາງມາຣີອາຖືພາແບບພິເສດ.

ຂ. ຄວາມດີຂອງໂຢເຊບສາມປະການ;

1. ເພິ່ນເຊື່ອຟັງພຣະເຈົ້າ.
2. ເພິ່ນເຊື່ອຟັງ ເຈົ້າໜ້າທີ່ບ້ານເມືອງ.
3. ຮັກແລະເບິ່ງແຍງຄອບຄົວຢ່າງເຕັມທີ່.

### 4. ອ່ານ 2:8-15 ເທວະດາສັຣເສີນພຣະເຈົ້າ

ກ. ເທວະດາແມ່ນ ທູດຂອງພຣະເຈົ້າລົງມາບອກຂ່າວດີ.

ຂ. ເທວະດາບອກຂ່າວການເກີດຂອງພຣະເຢຊູແກ່ພວກລ້ຽງແກະໃນທົ່ງຫຍ້າ.

ຄ. ແສງຣັສມີຂອງພຣະເຈົ້າໄດ້ສ່ອງຮອບພວກລ້ຽງແກະ ເປັນເຫດໃຫ້ເຂົາຢ້ານ.

ງ. ຫລາຍຄົນໃນກຸ່ມພວກລ້ຽງແກະເປັນຄົນຮັບຈ້າງ, ອີກຈຳນວນນຶ່ງລ້ຽງແກະຂອງຕົນເອງ.

ຈ. ເຂົາເປັນຄົນອົດທົນຕໍ່ດິນຟ້າອາກາດ, ກ້າຫານຂັບໄລ່ແລະຕີສັດຮ້າຍທີ່ຈະມາເຮັດອັນຕະຣາຍແກ່ຝູງແກະ.

ສ. ຝູງເທວະດາພາກັນລົງມາແຕ່ສວັນເພື່ອຮ້ອງສັຣເສີນ.

5. **ອ່ານຂ:16-20 ພວກລ້ຽງແກະສັຣເສີນ**

ກ. ເມື່ອພວກລ້ຽງແກະໄດ້ຮັບຂ່າວຈາກເທວະດາແລ້ວ;

1. ເຂົາກໍຕັດສິນໃຈປະຝູງແກະໄວ້ຕາມລຳພັງ (ນັກເທດຜູ້ນຶ່ງເວົ້າວ່າ ເທວະດາເບິ່ງແຍງຝູງແກະໃຫ້ເຂົາ)

2. ໄປຊອກຫາພຣະກຸມມານເຢຊູ ໂດຍບໍ່ມີຫຍັງນຳທາງເໝືອນພວກໂຫຣາຈານ (ມັດທາຍ 2)

ຂ. ຂໍ້ 17 ແມ່ນເຂົາໄປເວົ້າສູ່ຜູ້ອື່ນຟັງໃນມື້ຕໍ່ມາ

ຄ. ການເວົ້າຫລືເປັນພະຍານຂອງພວກຜູ້ລ້ຽງແກະມີສອງປະການຄື;

1. ເວົ້າໃນສິ່ງທີ່ເຂົາເຫັນ, <u>*ເຂົາໄດ້ເຫັນ*</u> ໝາຍຄວາມວ່າ ເຂົາໄດ້ເຫັນພຣະກຸມມານນອນທີ່ຮາງຫຍ້າດ້ວຍຕາຂອງເຂົາ.

2. ເວົ້າເຣື່ອງເຂົາໄດ້ຍິນເທວະດາບອກຂ່າວ <u>*ເຂົາໄດ້ຍິນ*</u> ໝາຍຄວາມວ່າ ໄດ້ຍິນຂ່າວດີນີ້ຈາກເທວະດາຜູ້ຮັບໃຊ້ ຫລືທູດຂອງພຣະເຈົ້າລົງມາບອກຂ່າວແກ່ເຂົາ.

ງ. ເມື່ອເຂົາເລົ່າຂ່າວນີ້ໃຫ້ຄົນຟັງແລ້ວ ເຂົາກໍກັບໄປເຮັດໜ້າທີ່ຂອງເຂົາເໝືອນເດີມ.

ຈ. ສິ່ງເຮົາຄວນຮຽນຈາກຊີວິດຂອງພວກລ້ຽງແກະມີດັ່ງນີ້;

1. ອອກໄປບອກຄົນອື່ນ ໃນສິ່ງທີ່ພວກເຮົາໄດ້ເຫັນພຣະເຢຊູທາງເຊື່ອ ແລະບອກຜູ້ອື່ນໃນສິ່ງທີ່ເຮົາໄດ້ຍິນຂ່າວປະເສີດຜ່ານທາງພຣະຄັມພີ, ຜ່ານທາງຜູ້ປະກາດແລະອື່ນໆ.

2. ຫລັງຈາກບອກແລ້ວຈຶ່ງກັບຄືນໄປສູ່ການງານປະຈຳວັນຂອງພວກເຮົາຄືພວກລ້ຽງແກະໄດ້ເຮັດນັ້ນ.

<u>**ຄຳຖາມ:**</u>

1. ເຮົາໄດ້ຮຽນຫຍັງຈາກຊີວິດໂຢເຊບ?

2. ເຮົາໄດ້ຮຽນຫຍັງຈາກຊີວິດພວກລ້ຽງແກະ?

3. ອີກດົນປານໃດເຮົາຈຶ່ງຈະເປັນຄືໂຢເຊບ ແລະຜູ້ລ້ຽງແກະ?

*ທວ*